# ສະພາການຄ້າ ແລະ ອຸດສາຫະກຳ
# ແຂວງສະຫວັນນະເຂດ



ສຄອ.ສຂ

20ND ANNIVERSARY
1992 - 2014

# SCCI

SAVANNAKHET CHAMBER OF COMMERCE & INDUSTRY

## ສາລະບານ
## CONTENTS


- ສານຂອງ ທ່ານເຈົ້າແຂວງ ແຂວງສະຫວັນນະເຂດ
- ສານຂອງ ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ
- ສານຂອງ ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ

**ພາກ 1: ນຳສະເໜີແຂວງສະຫວັນນະເຂດ**
- ການຈະເລີນເຕີບໃຫຍ່ທີ່ບໍ່ຢຸດຢັ້ງທາງດ້ານເສດຖະກິດ
- ທີ່ຕັ້ງພູມສັນຖານ
- ບັນດາທ່າແຮງທາງດ້ານເສດຖະກິດຂອງແຂວງ

**ພາກ 2: ການກຳເນີດຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ**
- ເຄື່ອງໝາຍຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ
- ສຳນັກງານຂອງ ສຄອ ແຂວງສະຫວັນນະເຂດ
- ພາລະບົດບາດຂອງ ສຄອ ແຂວງສະຫວັນນະເຂດ
- ໂຄງປະກອບການຈັດຕັ້ງ ສຄອ ແຂວງສະຫວັນນະເຂດ
- ສະມາຊິກ ສຄອ ແຂວງສະຫວັນນະເຂດ
- ຄຸນສົມບັດຂອງສະມາຊິກ ສຄອ ແຂວງສະຫວັນນະເຂດ

**ພາກ 3: ການເຕີບໃຫຍ່ຂະຫຍາຍຕົວຂອງ ສຄອ ແຂວງສະຫວັນນະເຂດ**
- ກອງປະຊຸມໃຫຍ່ ຄັ້ງທີ I ປີ 1992-1995
  ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ I,
  ຜົນງານ ແລະ ການເຄື່ອນໄຫວແຕ່ລະດ້ານ
- ກອງປະຊຸມໃຫຍ່ ຄັ້ງທີ II ປີ 1995-2002
  ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ II,
  ຜົນງານ ແລະ ການເຄື່ອນໄຫວແຕ່ລະດ້ານ
- ກອງປະຊຸມໃຫຍ່ ຄັ້ງທີ III ປີ 2002-2005
  ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ III,
  ຜົນງານ ແລະ ການເຄື່ອນໄຫວແຕ່ລະດ້ານ
- ກອງປະຊຸມໃຫຍ່ ຄັ້ງທີ IV ປີ 2005-2010
  ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ IV,
  ຜົນງານ ແລະ ການເຄື່ອນໄຫວແຕ່ລະດ້ານ
- ກອງປະຊຸມໃຫຍ່ ຄັ້ງທີ V ປີ 2010-2014
  ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ V,
  ພະນັກງານປະຈຳຫ້ອງການ ສຄອ ແຂວງສະຫວັນນະເຂດ
  ຜົນງານ ແລະ ການເຄື່ອນໄຫວແຕ່ລະດ້ານ

**ພາກ 4: ສະມາຊິກ ສຄອ ແຂວງ, ສະມາຄົມ ແລະ ກຸ່ມທຸລະກິດ**
- ລາຍຊື່ບັນດາສະມາຊິກຂອງສະມາຄົມ, ກຸ່ມ ແລະ ສະມາຊິກໂດຍກົງ
  ຂອງ ສຄອ ແຂວງສະຫວັນນະເຂດ

**ພາກ 5: ຜູ້ອຸປະຖຳ**



**ສຳນັກງານ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ**

ເຮືອນເລກທີ 305, ຖະໜົນອຸດົມສິນ, ບ້ານສຸນັນທາ
ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ
ໂທ: (856 41) 253 325
ແຟັກ: (856 41) 253 326
ອີແມລ: *savannakhet.lao@gmail.com*
*www.svk.laocci.com*


20ND ANNIVERSARY
1992 - 2014

# ກ້າວໄປທາງໜ້າ... ເພື່ອຄວາມເຂັ້ມແຂງ ຂອງພາກທຸລະກິດໃນ ສປປ ລາວ

# "Moving Forward for a Strong Business Community in Lao PDR"

## ສານ ຂອງ ທ່ານ ດຣ. ສຸພັນ ແກ້ວມີໄຊ
## ເລຂາຄະນະພັກແຂວງ, ເຈົ້າແຂວງສະຫວັນນະເຂດ

ບັນດາທ່ານທີ່ນັບຖື

ເນື່ອງໃນໂອກາດຄົບຮອບ 22 ປີ ຂອງການສ້າງຕັ້ງ ສຄອ.ສຂ ໃນທ່າມກາງທີ່ພັກ-ລັດ, ທົ່ວກອງທັບ, ທົ່ວປວງຊົນລາວກໍຄື: ພາກສ່ວນເສດຖະກິດເວົ້າລວມ, ເວົ້າສະເພາະກໍແມ່ນ ສຄອ.ສຂ ພ້ອມຕັ້ງໜ້າອອກແຮງເພື່ອບັນລຸເປົ້າໝາຍໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ແຜນການ 5 ປີ ແຫ່ງລັດ ຄັ້ງທີ VII ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ຂອງອົງຄະນະພັກແຂວງ ເຮັດໃຫ້ເສດຖະກິດຂອງແຂວງ ມີທ່າຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ນຳມາເຊິ່ງຄວາມສົມບູນພູນສຸກຂອງພໍ່ແມ່ປະຊາຊົນບັນດາເຜົ່າ. ສຄອ.ສຂ ໄດ້ຈັດພິທີສະເຫຼີມສະຫຼອງຄົບຮອບ 22 ປີ ຊຶ່ງເປັນນິມິດໝາຍອັນສຳຄັນ ເພື່ອທວນຄືນມູນເຊື້ອ ແລະ ພາລະບົດບາດຂອງ ສຄອ.ສຂ ໃນການເຕົ້າລວມຄວາມສາມັກຄີ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພາກທຸລະກິດຂອງແຂວງ.

ດ້ວຍຄວາມປິຕິຊົມຊື່ນ ແລະ ຍິນດີເປັນຢ່າງຍິ່ງທີ່ໄດ້ເຫັນວ່າຕະຫຼອດໄລຍະເວລາ 22 ປີ ສຄອ.ສຂໄດ້ຄຽງບ່າຄຽງໄຫຼ່ ກັບພາກລັດໃນພາລະກິດກໍ່ສ້າງຊີ້ນຳ-ນຳພາ ພາກທຸລະກິດ ເຄື່ອນໄຫວວຽກງານວິຊາສະເພາະຂອງຕົນໃຫ້ສອດຄ່ອງກັບທິດທາງ-ແນວທາງຂອງພັກລັດວາງອອກ ເອົາໃຈໃສ່ປະຕິບັດທຸກພັນທະ ແລະ ຕັ້ງໜ້າປະກອບສ່ວນເຂົ້າໃນທຸກກິດຈະກຳທີ່ທາງພັກ-ລັດຈັດຕັ້ງຂຶ້ນ. ຕັ້ງໜ້າຮັບຜິດຊອບການສັງລວມເອົາແນວຄວາມຄິດທີ່ກ້າວໜ້າຂອງພາກທຸລະກິດ, ສະເໜີຕໍ່ພາກລັດໃນການສ້າງເງື່ອນໄຂເອື້ອອຳນວຍ ແລະ ສົ່ງເສີມແກ່ການຜະລິດ, ທຸລະກິດການຄ້າ ແລະ ການລົງທຶນຂອງແຂວງ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

ໃນນາມການນຳພັກ-ລັດ ຂອງແຂວງສະຫວັນນະເຂດ, ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍມາຍັງ ສຄອ.ສຂ ທີ່ໄດ້ສ້າງຜົນງານອັນສຳຄັນຍິ່ງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຢ່າງສຸດອົກສຸດໃຈ, ຈົ່ງຕັ້ງໝັ້ນ, ເປັນເຈົ້າການໃນການຈັດຕັ້ງ-ນຳພາ ພາກທຸລະກິດຂອງແຂວງເຂົ້າເຊື່ອມໂຍງກັບສາກົນ ຜ່ານຜ່າທຸກສິ່ງທ້າທາຍທີ່ຈະເກີດຂຶ້ນໃນຍຸກໂລກາພິວັດ, ປັບປຸງຕົນເອງທັງທາງດ້ານຄວາມສາມາດຜະລິດ ແລະ ດ້ານນິກຳຕາມລະບົບການຕະຫຼາດຂອງສາກົນ, ຕັ້ງໜ້າຂະຫຍາຍສະມາຊິກໃຫ້ ນັບມື້ນັບຫຼາຍຂຶ້ນ ເພື່ອເປັນກຳລັງແຮງໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກໍຄືຂອງປະເທດຊາດໃຫ້ບັນລຸເປົ້າໝາຍບົນພື້ນຖານ 03 ຜົນປະໂຫຍດ (ຊາດ, ສັງຄົມ ແລະ ສ່ວນຕົວ). ດ້ານການນຳຂອງພັກ-ລັດຂອງແຂວງ ກໍໄດ້ໃຫ້ຄວາມສຳຄັນຕໍ່ການປະກອບສ່ວນຂອງ ສຄອ.ສຂ ຈະເອົາໃຈໃສ່ສະໜັບສະໜູນ ແລະ ສ້າງເງື່ອນໄຂທີ່ເອື້ອອຳນວຍຢ່າງເໝາະສົມ ເພື່ອໃຫ້ ສຄອ.ສຂ ໄດ້ສຳເລັດທຸກໜ້າທີ່ການງານຕາມພາລະບົດບາດທີ່ສຳຄັນ ແລະ ມີກຽດສະຫງ່າງາມ.

ຂໍອວຍພອນແດ່ ຄະນະບໍລິຫານງານ, ພະນັກງານ ແລະ ສະມາຊິກຂອງ ສຄອ.ສຂ ແລະ ນັກທຸລະກິດຜູ້ປະກອບການພາຍໃນແຂວງ ຈົ່ງມີສຸຂະພາບເຂັ້ມແຂງ, ມີໄຊຊະນະໃໝ່ໃຫຍ່ຫຼວງກວ່າເກົ່າ.

ສະຫວັນນະເຂດ, ວັນທີ 09 ມີນາ 2014

ເຈົ້າແຂວງສະຫວັນນະເຂດ

ດຣ. ສຸພັນ ແກ້ວມີໄຊ



## ສານຂອງ ທ່ານ ສີສະຫວາດ ທິລະວົງ
## ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ

ທ່ານປະທານ, ຄະນະບໍລິຫານ, ສະມາຊິກຂອງສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ ທີ່ນັບຖື

ໃນທ່າມກາງບັນຍາກາດທີ່ພາກລັດ ແລະ ພາກທຸລະກິດພາຍໃນແຂວງສະຫວັນນະເຂດ ກໍຄື ທົ່ວປະເທດກຳລັງເບີກບານມ່ວນຊື່ນ, ບຸກບືນ, ສູ້ຊົນ ແລະ ສຸມໃສ່ການຜັນຂະຫຍາຍເນື້ອໃນຈິດໃຈ ຂອງການປະຕິບັດແຜນງານ 04 ບຸກທະລຸ ແລະ ນະໂຍບາຍການຫັນສູ່ຮາກຖານປະຕິບັດວຽກງານ 03ສ້າງ ແລະ ສຸມໃສ່ການປະເມີນຜົນສຳເລັດຂອງການພັດທະນາເສດຖະກິດ-ສັງຄົມ ຄັ້ງທີ VII ຢ່າງຕັ້ງໜ້າ ເພື່ອບັນລຸຄາດໝາຍທີ່ວາງໄວ້ຕາມແນວທາງຂອງພັກວາງອອກໃຫ້ເປັນຮູບປະທຳ. ຄະນະບໍລິຫານງານ ແລະ ພະນັກງານປະຈຳ ສຄອ ແຂວງສະຫວັນກໍໄດ້ຕັ້ງໜ້າປະກອບສ່ວນເຂົ້າໃນການສັງລວມ, ບັນນາທິການຂໍ້ມູນຂ່າວສານ, ປະຫວັດຄວາມເປັນມາຂອງພາກທຸລະກິດພາຍໃນແຂວງເພື່ອຈັດພິມປຶ້ມຄົບຮອບ 22 ປີ ສຄອ ແຂວງສະຫວັນນະເຂດເຫຼັ້ມນີ້ຂຶ້ນ. ຈຸດປະສົງກໍເພື່ອທວນຄືນເຖິງມູນເຊື້ອການນຳພາ, ການເສຍສະຫຼະຮອບດ້ານຂອງຄະນະບໍລິຫານງານ ແລະ ພະນັກງານປະຈຳແຕ່ລະຊຸດ ທີ່ເຂົ້າມາບໍລິຫານ ສຄອ ແຂວງ ຕາມພາລະບົດບາດ-ໜ້າທີ່-ຄວາມຮັບຜິດຊອບທີ່ກຳນົດໄວ້ຢູ່ໃນດຳລັດຕ່າງໆ ເຊັ່ນວ່າ ດຳລັດສະບັບເລກທີ 175 ນຍ, ລົງວັນທີ 20 ສິງຫາ 1989, ດຳລັດສະບັບເລກທີ 125/ນຍ, ລົງວັນທີ 23 ກໍລະກົດ 2003 ແລະ ສະບັບເລກທີ 316/ນຍ, ລົງວັນທີ 20 ກັນຍາ 2009.

ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຮັບຮູ້ ແລະໄດ້ເຫັນວ່າ ຄະນະປະທານ, ຄະນະບໍລິຫານງານໄດ້ສ້າງ ສຄອ ແຂວງສະຫວັນນະເຂດໃຫ້ເຕີບໃຫຍ່ຂະຫຍາຍຕົວ, ມີຄວາມເຂັ້ມແຂງຂຶ້ນເທື່ອລະກ້າວ,ໄດ້ມີການເຄື່ອນໄຫວຢ່າງມີປະສິດທິພາບ ເພື່ອເຕົ້າໂຮມ-ປຸກລະດົມ-ຂົນຂວາຍ ແລະ ນຳພາບັນດາຫົວໜ່ວຍທຸລະກິດ ພາຍໃນແຂວງກໍຄື ແຂວງອ້ອມຂ້າງ, ພະຍາຍາມຍົກສູງລະດັບຂີດຄວາມສາມາດຂອງຕົນ ໃຫ້ສາມາດຮ່ວມມືກັບຕ່າງປະເທດ ແລະສາມາດແຂ່ງຂັນກັບເຂົາເຈົ້າໄດ້.ໃນນາມປະທານ ສຄອ ແຫ່ງຊາດ ຂໍສະແດງຄວາມຍ້ອງຍໍ-ຊົມເຊີຍຢ່າງສຸດໃຈມາຍັງຄະນະບໍລິຫານງານ, ພະນັກງານປະຈຳ ແລະ ຕະຫຼອດເຖິງສະມາຊິກ ສຄອ.ສຂ ທີ່ມີຄວາມເປັນເອກະພາບ, ປະກອບສ່ວນ ແລະ ພັດທະນາ ສຄອ.ສຂ ໃຫ້ເຂັ້ມແຂງ, ມີຜົນສຳເລັດຫຼາຍໆດ້ານ. ສຳຄັນຢ່າງຍິ່ງພາກທຸລະກິດໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຢູ່ພາຍໃນແຂວງສະຫວັນນະເຂດ ຢ່າງເປັນເຈົ້າການ.

ການພິມປຶ້ມຄົບຮອບ 22 ປີ ຂອງ ສຄອແຂວງຄັ້ງນີ້ ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ແມ່ນຄວາມຕັ້ງໃຈ ແລະ ແມ່ນການປະກອບສ່ວນຂອງບັນດາທ່ານຄະນະບໍລິຫານງານ, ພະນັກງານປະຈຳ, ທີ່ປຶກສາ ແລະ ຫົວໜ່ວຍທຸລະກິດທຸກໆຂະແໜງການ. ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງຄະນະຮຽບຮຽງ, ຄະນະບັນນາທິການ, ນັກອອກແບບ ແລະຜູ້ສະໜັບສະໜູນທຸກໆທ່ານ ທີ່ໄດ້ຕັ້ງໜ້າຈັດທຳປຶ້ມເຫຼັ້ມນີ້ຢ່າງມີຄວາມຮັບຜິດຊອບ ແລະ ມີຜົນສຳເລັດຢ່າງສະຫງ່າງາມ.

ຂໍອວຍພອນແດ່ທ່ານ ຄະນະປະທານ, ຄະນະບໍລິຫານງານ, ພະນັກງານ ແລະ ສະມາຊິກຂອງ ສຄອ ແຂວງສະຫວັນນະເຂດ, ບັນດາຫົວໜ່ວຍທຸລະກິດພາຍໃນ-ຕ່າງປະເທດ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ມີຄວາມສຳເລັດໃນໜ້າທີ່ການງານ.

ນະຄອນຫຼວງວຽງຈັນ, ວັນທີ ວັນທີ 12 ມີນາ 2014

ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ

ສີສະຫວາດ ທິລະວົງ

## ສານຂອງ ທ່ານ ພິສິດ ບັນຍາດິດ
## ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ

ບັນດາທ່ານ ຄະນະປະທານ, ຄະນະປະຈຳ, ຄະນະທີ່ປຶກສາ ຕະຫຼອດເຖິງສະມາຊິກ ສຄອ.ສຂ ທຸກໆທ່ານ ທີ່ນັບຖື ແລະ ຮັກແພງ

ສຄອ.ສຂ ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 16 ມັງກອນ 1992 ພາຍໃຕ້ມະຕິແຕ່ງຕັ້ງ ເລກທີ 926/ກຄທ ລົງວັນທີ 28 ພະຈິກ 1991 ຂອງກະຊວງການຄ້າ ແລະ ທ່ອງທ່ຽວ ແລະ ກໍເປັນໄລຍະເວລາທີ່ລັດຖະບານໄດ້ຫັນກົນໄກເສດຖະກິດໃໝ່ໄປສູ່ເສດຖະກິດຕະຫຼາດ, ຫຼຸດຜ່ອນລະບອບເກື້ອກູນດຳເນີນນະໂຍບາຍເປີດກວ້າງ ທາງດ້ານການຄ້າ ແລະ ເຂດວຽກງານເສດຖະກິດ. ແຕ່ເມື່ອສະພາບການພັດທະນາເສດຖະກິດພາຍໃນປະເທດ ນັບມື້ເພີ່ມຂຶ້ນ ແລະ ການແຂ່ງຂັນທາງທຸລະກິດກໍສູງຂຶ້ນ. ພັກ-ລັດຖະບານຈຶ່ງເຫັນຄວາມສຳຄັນ ແລະ ຄວາມຈຳເປັນຕ້ອງໄດ້ມີອົງກອນເປັນບ່ອນເຕົ້າໂຮມຄວາມສາມະຄີພາຍໃນພາກທຸລະກິດ ເພື່ອຊ່ວຍເຫຼືອເຊິ່ງກັນແລະກັນ ໃຫ້ເຂັ້ມແຂງຢູ່ພາຍໃຕ້ການຊີ້ນຳ-ນຳພາຂອງພັກ, ສຄອ.ສຂ ຈຶ່ງຖືກສ້າງຕັ້ງຂຶ້ນຄົບຮອບ 22 ປີ ພໍດີ.

ຕະຫຼອດໄລຍະຜ່ານມາ, ສຄອ.ສຂ ໄດ້ສ້າງຜົນງານຫຼາຍຢ່າງທີ່ພົ້ນເດັ່ນ ຢູ່ໃນວຽກງານການເມືອງ,ສັງຄົມ ແລະ ເສດຖະກິດຂອງແຂວງ ໂດຍໄດ້ນຳພາພາກທຸລະກິດຂອງແຂວງ ເຕົ້າໂຮມກັນຈັດຕັ້ງເປັນກຸ່ມ, ສາມະຄົມຕ່າງໆ ຕາມຂະແໜງທຸລະກິດກໍ່ສ້າງ ແລະ ປັບປຸງຫົວໜ່ວຍທຸລະກິດຂະໜາດນ້ອຍ-ກາງທັງໃໝ່ຫຼືເກົ່າ ໃຫ້ສາມາດເຮັດການຜະລິດແບບມີມາດຕະຖານທາງດ້ານປະລິມານ ແລະ ຄຸນນະພາບ,ໃຫ້ມີສິນຄ້າເພື່ອສະໜອງແກ່ຜູ້ບໍລິໂພກ-ອຸປະໂພກໃຊ້ພາຍໃນແຂວງໄດ້ຢ່າງພຽງພໍ ທັງທົດແທນການນຳເຂົ້າ ແລະ ເພື່ອການສົ່ງອອກ. ມາເຖິງປັດຈຸບັນໄດ້ມີນັກທຸລະກິດຜັດປ່ຽນກັນເຂົ້າມາ ເປັນຄະນະບໍລິຫານງານໂດຍຜ່ານຂະບວນການຄັດເລືອກ ແລະ ເລືອກຕັ້ງມາໄດ້ເຖິງ 05 ຊຸດ, ສາມາດເຕົ້າລວມໄດ້ມີສະມາຊິກສົມບູນໂດຍກົງ 202 ຫົວໜ່ວຍທຸລະກິດ, ມີ 04 ສະມາຄົມ ແລະ 10 ກຸ່ມທຸລະກິດ. ແຕ່ລະກຸ່ມ/ສະມາຄົມໄດ້ຂະຫຍາຍສະມາຊິກຂອງຕົນໄດ້ຫຼາຍກວ່າ 30 ຫົວໜ່ວຍທຸລະກິດ ຖືວ່າສະມາຊິກຂອງ ສຄອ.ສຂ ແບບຜ່ານກຸ່ມ ມີຫຼາຍກວ່າ 500 ຫົວໜ່ວຍທຸລະກິດ.

ຂ້າພະເຈົ້າໃນນາມ ປະທານ ສຄອ.ສຂ ຊຸດທີ V ຂໍສະແດງຄວາມຂອບອົກຂອບໃຈມາຍັງການນຳ ພັກ-ລັດຖະບານ ແລະ ອຳນາດການປົກຄອງແຂວງທີ່ໄດ້ໃຫ້ການຊີ້ນຳ-ນຳພາ, ຊ່ວຍເຫຼືອ ແລະ ພະຍາຍາມສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ພາກທຸລະກິດຕະຫຼອດມາ, ເຫັນໄດ້ຄວາມໝາຍຄວາມສຳຄັນຕໍ່ພາລະບົດບາດຂອງ ສຄອ.ສຂ ໄດ້ເອື້ອອຳນວຍທຸກການເຄື່ອນໄຫວວຽກງານຂອງ ສຄອ.ສຂ ແລະ ມີຜົນສຳເລັດຫຼາຍດ້ານ. ແຕ່ພວກເຮົາຍັງຈະຕ້ອງໄດ້ຜ່ານຜ່າອຸປະສັກ ແລະ ສິ່ງທ້າທາຍນາໆປະການ ໂດຍສະເພາະແມ່ນໃນໄລຍະຂ້າມຜ່ານຂອງພວກເຮົາ ກ້າວເປັນສະມາຊິກຂອງອົງການຄ້າໂລກ ແລະ ປະຊາຄົມເສດຖະກິດ ອາຊຽນ. ດັ່ງນັ້ນ, ຈຶ່ງຂໍຮຽກຮ້ອງມາຍັງເພື່ອນສະມາຊິກ ແລະ ຫົວໜ່ວຍທຸລະກິດທົ່ວແຂວງ ຈົ່ງໄດ້ເຂົ້າໃຈການປ່ຽນແປງດັ່ງກ່າວຢ່າງມີເຫດຜົນ, ເຕົ້າໂຮມກັນເປັນກຸ່ມ-ສະມາຄົມມີຄວາມສາມັກຄີເປັນປຶກແຜ່ນ, ມີຄວາມມຸ້ງໝັ້ນຢ່າງເດັດດ່ຽວຮ່ວມກັນກັບ ສຄອ.ສຂ ເພື່ອພ້ອມກັນກ້າວໄປຢ່າງໜັກແໜ້ນ ແລະ ສາມາດແຂ່ງຂັນກັບນານາປະເທດໄດ້.

ບັນດາເພື່ອນນັກທຸລະກິດທີ່ນັບຖື ແລະ ຮັກແພງທັງຫຼາຍ, 22 ປີ ທີ່ຜ່ານມາ ບັນດາທ່ານໄດ້ປະກອບສ່ວນທັງປັນຍາ, ເຫື່ອແຮງ ແລະ ຊັບສິນ ເຂົ້າມາພັດທະນາ ສຄອ.ສຂ ແລະ ປະກອບສ່ວນຢ່າງຕັ້ງໜ້າ ເພື່ອພັດທະນາໂຄງລ່າງພື້ນຖານທາງເສດຖະກິດຂອງແຂວງ ກໍຄືຂອງຊາດ, ຕໍ່ກັບຜົນງານດັ່ງກ່າວນັ້ນ ຄະນະບໍລິຫານທຸກໆຊຸດ ຂອງ ສຄອ.ສຂ ຍັງຈາລຶກບຸນຄຸນ, ຄຸນງາມຄວາມດີ, ຂໍສະແດງຄວາມຂອບໃຈຢ່າງສູງ ມາຍັງທຸກໆທ່ານ ແລະ ຫວັງຢ່າງຍິ່ງວ່າ ບັນດາເພື່ອນນັກທຸລະກິດຍັງຈະຮ່ວມມືກັນພັດທະນາພາກທຸລະກິດຢູ່ແຂວງ ໃຫ້ໂດດເດັ່ນໃນເອທີສາກົນ, ພ້ອມກັນເປັນກຳລັງແຮງໃຫ້ແກ່ແຂວງສະຫວັນນະເຂດ ໃນການພັດທະນາເສດຖະກິດ.

ໄກສອນພົມວິຫານ, ແຂວງສະຫວັນນະເຂດ, ວັນທີ 14 ມີນາ 2014

ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ

ພິສິດ ບັນຍາດິດ



ພາກ 1

ສະຫວັນນະເຂດ ຜືນແຜ່ນດິນຄຳ
ວັດທະນະທຳ ຫຼາຍເຜົ່າຊົນ ລ້ຳເລີດ
ແຫຼ່ງກຳເນີດ ໄດໂນເສົາຮ້ອຍລ້ານປີ
ປູຊະນີຍະສະຖານ ພະທາດອິງຮັງງາມສະຫງ່າ
ສົມນາມວ່າຖິ່ນກຳເນີດ ວິລະບູລຸດ ແຫ່ງຊາດລາວ

# ແຂວງສະຫວັນນະເຂດ “ການຈະເລີນເຕີບໃຫຍ່ທີ່ບໍ່ຢຸດຢັ້ງ ທາງດ້ານເສດຖະກິດ”
# SAVANNAKHET PROVINCE “STEADY ECONOMIC GROWTH”




## ທີ່ຕັ້ງພູມສັນຖານ

ແຂວງສະຫວັນນະເຂດ ຕັ້ງຢູ່ພາກກາງ ຂອງ ສປປ ລາວ ຊຶ່ງມີຊາຍແດນຕິດຈອດກັບບັນດາແຂວງ ແລະ ປະເທດຕ່າງໆ ຄື: ທາງທິດຕາເວັນອອກ ຕິດກັບ ແຂວງກວາງຈິ ສສ ຫວຽດນາມ, ທິດຕາເວັນຕົກ ຕິດກັບ ຈັງຫວັດມຸກດາຫານ ຣາຊະອານາຈັກໄທ, ທິດເໜືອ ຕິດກັບ ແຂວງຄຳມ່ວນ ແລະ ທິດໃຕ້ ຕິດກັບ ແຂວງສາລະວັນ. ເນື້ອທີ່ທັງໝົດ 2,177,400 ເຮັກຕາ ທີ່ກວມເອົາເຂດພູດອຍກວມ 42%, ເຂດທົ່ງພຽງ 58%.

ແຂວງສະຫວັນນະເຂດ ມີເນື້ອທີ່ສຳລັບດຳເນີນການຜະລິດເຖິງ 75% ຂອງເນື້ອທີ່ທັງໝົດ. ປັດຈຸບັນໄດ້ພັດທະນາເປັນ ທົ່ງນາປູກເຂົ້າ ຫຼາຍກວ່າ190,000 ເຮັກຕາ ເຊິ່ງເປັນອູ່ເຂົ້າອູ່ປາຂອງແຂວງ, ມີປະຊາກອນທັງໝົດ ຫຼາຍກວ່າ 900,000 ຄົນ (ຢູ່ໃນໄວອອກແຮງງານ 55%), ແຮງງານສ່ວນໃຫຍ່ແມ່ນຜູກພັນກັບການຜະລິດ ກະສິກຳ.

ພາຍຫຼັງທີ່ລັດຖະບານໄດ້ນຳໃຊ້ກົນໄກເສດຖະກິດການຕະຫຼາດໃນປີ 1987. ການລົງທຶນຈາກທັງ ພາຍໃນແລະຕ່າງປະເທດ ກໍໄດ້ເຂົ້າມາສູ່ແຂວງສະຫວັນນະເຂດຢ່າງຕໍ່ເນື່ອງ, ເຮັດໃຫ້ມີການຄ້າ-ການຂາຍ ແລະ ການຜະລິດຫຼາຍຂຶ້ນ, ການດຳເນີນທຸລະກິດບໍລິການຕ່າງໆ ກໍ່ນັບມື້ຫຼາຍຂຶ້ນ. ລັດຖະບານ, ອຳນາດການປົກຄອງຂັ້ນແຂວງໄດ້ປັບປຸງ ແລະ ສ້າງສິ່ງອຳນວຍຄວາມສະດວກເຮັດໃຫ້ບັນດາວິສາຫະກິດທີ່ເກີດຂຶ້ນໃໝ່ ມີຄວາມສາມາດໃນການພັດທະນາຕົນເອງມີຄວາມເຂັ້ມແຂງ,ມີຄວາມສາມາດໃນການຕໍ່ລອງ ແລະ ສາມາດແຂ່ງຂັນຢູ່ພາຍໃນ, ພາກພື້ນ ແລະ ສາກົນຢ່າງມີປະສິດທິຜົນ. ຈາກສະພາບການປ່ຽນແປງໃໝ່ຢ່າງພາວະວິໄສຂອງໂລກ.

ເມື່ອວັນທີ 20 ທັນວາ 2006 ໄດ້ມີພິທີເປີດ ຂົວມິດຕະພາບ ລາວ-ໄທ ແຫ່ງທີ 2 ຢ່າງເປັນທາງການ ເຊິ່ງຂົວນີ້ເປັນຂົວເຊື່ອມແລວທາງເສດຖະກິດ ຕາເວັນຕົກ-ຕາເວັນອອກ ລະຫວ່າງ ຫວຽດນາມ-ລາວ-ໄທ-ພະມ້າ ເຮັດໃຫ້ແຂວງສະຫວັນນະເຂດ ເປັນເສັ້ນທາງການຄ້າທີ່ສຳຄັນຂອງລາວ ແລະ ລັດຖະບານລາວຍັງໄດ້ປະກາດສ້າງຕັ້ງ ເຂດເສດຖະກິດພິເສດສະຫວັນ-ເຊໂນ ເພື່ອເປັນການສົ່ງເສີມ ແລະ ດຶງດູດການລົງທຶນ. ສ່ວນເສັ້ນທາງການຄົມມະນາຄົມຫຼັກໆ ທີ່ສຳຄັນຂອງແຂວງສະຫວັນນະເຂດ, ມີເສັ້ນທາງຫມາຍເລກ 9 ເປັນເສັ້ນທາງເຊື່ອມເສດຖະກິດ ທິດຕາເວັນອອກ-ຕາເວັນຕົກ ຫຼື **EWEC** (EASE WEST ECONOMIC CORRIDOR) ແລະ ເສັ້ນທາງໝາຍເລກທີ 13 ເປັນເສັ້ນທາງຕັດຜ່ານແຕ່ເໜືອຫາໃຕ້.





## Geographic Location

Savannakhet province is located in the central part of Lao PDR, bordered with the provinces and neighboring countries, such as Guangchi Province of SR Vietnam in the East, Moukdahan Province of the Kingdom of Thailand in the West, Khammouane Province in the North and Saravan Province in the south. The total area is 2,177,400 ha including 42% of mountainous areas and 58% of flat land areas.

The production areas of Savannakhet Province cover 75% of the total area. The total area developed for paddy rice cultivation is 190,000 ha which is the important source of food of the province. The province has the total population of more than 90,000 inhabitants (of whom 55% are of workingage) with the majority working in agriculture sector.

After the introduction of the market economic mechanism in 1987, the domestic and foreign investments in Savannakhet Province have been increasing steadying, leading to more and more trade and production activities as well as services. The government and the provincial authorities have improved and created a lot of facilities which enable new enterprises to be able to develop and strengthen themselves to be in the position to negotiate and complete at the local, regional and international levels in effective manners in response to the global emerging situations.





On 20th December 2006, the 2nd Lao-Thai Friendship Bridge was officially opened. This bridge serves as an economic corridor linking the west to the east between Vietnam, Laos, Thailand and Myanmar, making Savannakhet an important trading route and the government of Laos has anounced the establishment of Savan-Seno Special Economic Zone in order to promote and attract investments. The important transportation routes of Savannakhet Province are the road No.9 severed as east-west economic corridor or EWEC (East West Economic Corridor) and route No.13 running from the northern to the southern parts of the country.

## I. ບັນດາທ່າແຮງທາງດ້ານເສດຖະກິດຂອງແຂວງສະຫວັນນະເຂດ

ແຂວງສະຫວັນນະເຂດ ແມ່ນແຂວງໜຶ່ງ ທີ່ນອນຢູ່ໃນແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ, ມີເສັ້ນທາງຫຼວງແຫ່ງຊາດ ໝາຍເລກ 9, ທີ່ເຊື່ອມໂຍງກັບຊາຍແດນຂອງສອງເບື້ອງ (ດ່ານສາກົນບ້ານແດນສະຫວັນ ຕິດຈອດກັບດ່ານລາວບາວ, ສສ ຫວຽດນາມ, ດ່ານສາກົນຂົວມິດຕະພາບ II ທີ່ຕິດຈອດກັບ ຈ. ມຸກດາຫານ, ຣາຊະອານາຈັກໄທ). ແຂວງສະຫວັນນະເຂດ ຍັງອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ທີ່ສາມາດດຳເນີນການຜະລິດໄດ້ຕະຫຼອດປີ, ມີແຮງງານ, ມີພື້ນຖານໂຄງລ່າງທີ່ສະດວກ, ມີເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະໄວ້ຮອງຮັບ, ເຊິ່ງສ້າງແຮງດຶງດູດແກ່ນັກລົງທຶນຕ່າງປະເທດ.

### 1.1 ດ້ານເສດຖະກິດ

#### 1.1.1 ການລົງທຶນ

ນັບແຕ່ປີ 1992 ມາຈົນເຖິງປະຈຸບັນ, ການລົງທຶນຂອງຕ່າງປະເທດ ຢູ່ແຂວງສະຫວັນນະເຂດ ມີທັງໝົດ149 ໂຄງການ, ມູນຄ່າການລົງທຶນ: 1,783.81 ລ້ານກວ່າໂດລາ ຫຼື ເທົ່າກັບ 14,270.51 ຕື້ກີບ, ໃນນັ້ນການລົງທຶນ ໃນເຂດທົ່ວໄປມີ 108 ໂຄງການ, ມູນຄ່າ 1,594.89 ລ້ານໂດລາ, ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ມີ 33 ໂຄງການ,

ມູນຄ່າ 169.95 ລ້ານໂດລາ ຫຼືເທົ່າກັບ 1,359.61 ຕື້ກວ່າກີບ, ເຂດການຄ້າຊາຍແດນບ້ານແດນສະຫວັນ ມີ 8 ໂຄງການ, ມູນຄ່າ 18.30 ລ້ານໂດລາ ຫລືເທົ່າ 146.42 ຕື້ກວ່າກີບ.

ຕ່າງປະເທດລົງທຶນເຂົ້າຫລາຍກວ່າໝູ່ ແມ່ນຂະແໜງກະສິກຳ 35 ໂຄງການ, ມູນຄ່າ 962.54 ລ້ານໂດລາ, ຕໍ່ມາຂະແໜງພະລັງງານ ແລະ ບໍ່ແຮ່ 11 ໂຄງການ, ມູນຄ່າ 375.36 ລ້ານໂດລາ, ຂະແໜງບໍລິການ 52 ໂຄງການ, ມູນຄ່າ 282.79 ລ້ານໂດລາ, ສ່ວນຂະແໜງອຸດສາຫະກຳມີ 51 ໂຄງການ, ມູນຄ່າ 163.10 ລ້ານໂດລາ.

ການລົງທຶນຕ່າງປະເທດຫຼາຍກວ່າໝູ່ ແມ່ນ ສປ ຈີນ ມີ 36 ໂຄງການ, ມູນຄ່າ 396 ລ້ານກວ່າໂດລາ, ຮອງລົງມາແມ່ນ ຣາຊະອານາຈັກໄທ ມີ 36 ໂຄງການ, ມູນຄ່າ 303.74 ລ້ານກວ່າໂດລາ, ອັນດັບສາມແມ່ນ ສສ ຫວຽດນາມ ມີ 22 ໂຄງການ, ມູນຄ່າ 151.44 ລ້ານກວ່າໂດລາ.













## I. Economic potential of Savannakhet Province

Savannakhet Province is located in the East-West Economic Corridor with national road No.9 connecting the two sides of borders (Dansavan International checkpoint connecting to Lao Bao check point of the Lao-Vietnam border, Second Friendship Bridge international checkpoint connecting Savannakhet to Moukdahan Province of Thailand). Savannakhet is rich in natural resources with enabling environment for the agriculture production whole year round. The province has labor force, appropriate infrastructures, Economic Zone and a specific Economic Zone available for attracting foreign investments

### 1.1 Economy

#### 1.1.1 Investment

Since 1992 to date, foreign investments in Savanhnket province have totaled to 149 projects with a total investment capital of USD1,783.81million or equivalent to 14,270.51 billion Kip including 108 general investment projects with investment valuable of USD 1,594.89 million. The Savan-Seno Special Economic Zone has 33 projects with a total investment capital of USD 169.95 million or equivalent to 1,359.61 billon Kip. The Dansavan Economic area has 8 projects with a total investment capital of USD 18.3 million or equivalent to 146.42 billion Kip.

The majority of foreign investments are related to agriculture development in 35 projects with an investment capital of USD 962.54 million. Savannakhet Province has 11 projects in the energy and mining sectors with a total of USD 375.36 million, 52 projects in the service sector totaling to USD 282.79 million; and 51 projects in industry sector with total of USD163.10 million.

The leading country in the investment is the PR China with 36 projects, totaling to USD 396 million while the Kingdom of Thailand ranked second with 36 projects worth of USD 303.74 million, and SR Vietnam ranked third with 32 projects worth of USD 151.44 million.

### 1.2 ດ້ານອຸດສາຫະກຳ ແລະ ການຄ້າ

#### 1.2.1 ດ້ານອຸດສາຫະກຳ

ດ້ານວຽກງານອຸດສາຫະກຳຢູ່ແຂວງສະຫວັນນະເຂດ ມີທ່າຂະຫຍາຍຕົວໄປເລື້ອຍໆ, ປັດຈຸບັນໃນທົ່ວແຂວງ (ບໍ່ນັບຢູ່ໃນເຂດເສດຖະກິດພິເສດ) ມີໂຮງານອຸດສາຫະກຳປຸງແຕ່ງ 1,996 ແຫ່ງ ມີມູນຄ່າການລົງທຶນ 2,076.07 ຕື້ກີບ,ໄດ້ສ້າງວຽກເຮັດງານທຳໄດ້ 13,632 ຄົນ, ໃນນັ້ນມີໂຮງງານຂະໜາດໃຫຍ່ 73 ແຫ່ງ, ຂະໜາດກາງ ມີ 82 ແຫ່ງ ສາມາດສະໜອງຄວາມຮຽກຮ້ອງຕ້ອງການຊົມໃຊ້ພາຍໃນໄດ້ບາງສ່ວນ ແລະ ຈຳນວນໜຶ່ງກໍເປັນສິນຄ້າສົ່ງອອກ, ລັດຖະບານໄດ້ມີນະໂຍບາຍໃໝ່ຫຼາຍຢ່າງ ຕໍ່ກັບນັກລົງທຶນໃໝ່ (ຢູ່ໃນກົດໝາຍສົ່ງເສີມການລົງທຶນ) ເພື່ອເຂົ້າມາລົງທຶນຢູ່ໃນເຂດອຸດສາຫະກຳ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ 04 ແຂວງ.













### 1.2 Industries and Trades

#### 1.2.1 Industries

Industrial activities in Savannakhet province have continuously increased. Now in the whole province (excluding the Economic Zone) there are 1,996 processing industrial factories with a total investment of 2,076,07 billion Kip which create employment opportunities for 12,632 people. Of these 73 factories are of large scale, 82 are of medium scale wich partially meet the demand within the province while some of the portions of the production are exported. The government has introduced a number of new policies as incentives for new investors (as per the investment promotion law) for those who have interests in investing in the industrial and Special Economic Zone and in the Specific Economic Zone for four provinces.

#### 1.2.2 ດ້ານການຄ້າ

- ການຄ້າພາຍໃນ: ໃນຊ່ວງສາມປີ (2011-2013) ມີມູນຄ່າສະເລ່ຍແຕ່ລະປີ ຫຼາຍກວ່າ 1,200 ລ້ານ ກີບ, ການຈໍລະຈອນສິນຄ້າ ສ່ວນໃຫຍ່ແມ່ນຂຶ້ນກັບຕະຫຼາດເປັນພື້ນຖານ, ປັດຈຸບັນ ມີທັງໝົດ 68 ແຫ່ງໃນນັ້ນ: ຕະຫຼາດໃຫຍ່ 18 ແຫ່ງ, ຕະຫຼາດກາງ 07 ແຫ່ງ, ຕະຫຼາດນ້ອຍ 19 ແຫ່ງ ແລະ ຕະຫຼາດນັດ 24 ແຫ່ງ, ການລົງທຶນໃນການກໍ່ສ້າງ ແລະ ການຈັດສັນຕະຫຼາດ. ລັດຖະບານໄດ້ເປີດກວ້າງໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າສຳປະທານດ້ວຍຮູບການສັນຍາກັບພາກລັດ.
- ດ້ານການສົ່ງອອກ: ໃນ 03 ປີຜ່ານມາ (2011-2013) ສະເລ່ຍລວມການສົ່ງອອກໄດ້ຫຼາຍກວ່າ 800 ລ້ານໂດລາສະຫະລັດ. ໃນນັ້ນສ່ວນໃຫຍ່ແມ່ນ ການສົ່ງອອກແຮ່ທາດ ກວມເອົາ 87.5% ຫຼຸດມາ ແມ່ນການສົ່ງສິນຄ້າອື່ນໆ.

• ດ້ານການນຳເຂົ້າ: ການນຳເຂົ້າສະເລ່ຍ 3 ປີຜ່ານມາ (2011-2013) ມີມູນຄ່າຫຼາຍ 250 ລ້ານໂດລາສະຫະລັດ, ສິນຄ້າສ່ວນໃຫຍ່ທີ່ແຂວງສະຫວັນນະເຂດນຳເຂົ້າ ແມ່ນ: ນ້ຳມັນເຊື້ອໄຟ, ພາຫະນະ, ຊິ້ນສ່ວນອາໄຫຼ່, ສິນຄ້ານຳເຂົ້າເພື່ອຮັບໃຊ້ໂຄງການ, ສິນຄ້ານຳເຂົ້າເພື່ອຮັບໃຊ້ການຜະລິດ, ສິນຄ້ານຳເຂົ້າເພື່ອຮັບໃຊ້ວຽກງານກະສິກຳ ແລະ ນຳເຂົ້າເພື່ອສົ່ງອອກ ໄປປະເທດທີສາມ.





1.2.2 Trading

• Domestic Trade:

During the three-year period (2011- 2013) the average trading value is more than 1,200 million kip. The majority of the trading channel is through the market system. At present there are 68 markets in total, of which 18 are categorized as big, 7 are of medium, 19 are of small size and 24 are categorized as rural trade fairs. The investment opportunities in the construction and management of market are also areas opened by the government for the domestic and foreign investors in the form of concession with agreement to be signed with the relevant government sectors.

• Exports

During the three-year period (2011-2013) the total revenue gained from exports are USD 800 million, of which the export of minerals covers 87.5% and the rest are the exports of other goods.

• Imports

The total volume of the imports in the last three years (2011-2013) is more than USD250 million. The main commodities imported to Savanhnakhet Province are fuels, vehicles, spare parts, imported commodities to be used in development projects, goods for production activities, goods imported for agricultural purposes and the goods imported for re-exportation to third countries.

## 1.3 ດ້ານກະສິກຳ

- ສະຫວັນນະເຂດ ມີເນື້ອທີ່ສຳລັບການຜະລິດກະສິກຳທັງໝົດ 651,385 ເຮັກຕາ
- ເນື້ອທີ່ຊັບຊາວເປັນນາແລ້ວ ແມ່ນ 180,000 ເຮັກຕາ
- ໂຄງການຊົນລະປະທານ ທັງໝົດ 399 ແຫ່ງ, ສາມາດຕ້ານໄພແລ້ງ ໄດ້ 50,000 ເຮັກຕາ
- ການຜະລິດນາແຊງໄດ້ 33,000 ເຮັກຕາ ແລະ ສາມາດຜະລິດເຂົ້າເປືອກໄດ້ ປະມານ 165,000 ໂຕນ
- ສະເລ່ຍເຂົ້າກິນໃສ່ຫົວຄົນ 300 ກິໂລ/ຄົນ/ປີ
- ນອກຈາກນັ້ນຍັງມີເນື້ອທີ່ເໝາະສົມແກ່ການປູກພືດເຊັ່ນ: ສາລີ, ມັນຕົ້ນ, ອ້ອຍ, ກ້ວຍ, ຖົ່ວເຫຼືອງ, ຖົ່ວດິນ ແລະອື່ນໆ
- ເນື້ອທີ່ປູກພືດອຸດສະຫະກຳ ທັງໝົດ 134,874 ເຮັກຕາ. ໃນນັ້ນມີເນື້ອທີ່ສຳປະທານ 89,752 ເຮັກຕາ ແລະ ເນື້ອທີ່ປະຊາຊົນປູກມີ 45,122 ເຮັກຕາ
- ເນື້ອທີ່ລ້ຽງສັດ 9,856 ເຮັກຕາ









## 1.3 Agriculture

- Savannakhet Province has a total area of arable land for agricultural production of 651,385 ha.
- The area used for paddy cultivation is 180,000 ha.
- There are 399 irrigation projects which can supply water for agriculture purposes for 50,000 ha in the dry season.
- 33,000 ha of land is used for dry season rice cultivation which can produce 165,000 tons of rice
- The average rice consumption per head is 300 kg/person/year.
- There are land areas which are suitable for cash crops, maiz, casava, sugar cane, bananas, soya beans, penuts and etc.
- The area used for plantation of industrial plants is 134,874 ha. Of these 98,752 ha are used for concession projects while 45,122 ha are used by local people for the plantation of industrial plants.
- The area used for livestock are 9856 ha

## 1.4 ດ້ານຄົມມະນາຄົມ ແລະ ຂົນສົ່ງ

### 1.4.1 ດ້ານການເຊື່ອມຕໍ່ສາກົນ

ການພັດທະນາໂຄງລ່າງເພື່ອເຊື່ອມຕໍ່ກັບສາກົນ, ໂດຍສະເພາະ ກັບບັນດາປະເທດລຸ່ມແມ່ນ້ຳຂອງ (GMS) ແລະ ອາຊຽນ ສ້າງຈຸດກວດກາຮ່ວມກັນຢູ່ດ່ານສາກົນ (ຈຸດCCA) ເພື່ອຫຼຸດຜ່ອນເວລາກວດກາສິນຄ້າ ໃນດ່ານສາກົນ ຮັບປະກັນເວລາໃນການຂົນສົ່ງສິນຄ້າຂ້າມແດນ ແລະ ຜ່ານແດນ. ຕາມເສັ້ນທາງເລກ 9 ໄດ້ສ້າງສິ່ງອຳນວຍຄວາມສະດວກ ໂດຍສະເພາະຈຸດພັກເຊົາຂອງລົດບັນທຸກ ແລະ ໂດຍສານ, ໄດ້ມີການປັບປຸງເສັ້ນທາງເລກ 9 ເພື່ອຕອບສະໜອງດ້ານການຂົນສົ່ງສິນຄ້າ ແລະ ໂດຍສານທັງພາຍໃນ ແລະ ຕ່າງປະເທດ.





## 1.4 Public works and transport in Savannakhet Province

### 1.4.1 International integration potentials

As part of infrastructure development for international integration in particular with the Greater Mekong Sub-region countries (GMS) and ASEAN countries, common border checkpoints have been established (CCA) in order to reduce the time for checking the goods passing international check-points to ensure timely delivery of goods passing through the checkpoints. Along road No 9, facilities have been constructed to be used as rest stop points for truck and bus drivers, and the road itself has been improved to be convenient for transportation of domestic and foreign passengers and goods.






1.4.2 ດ້ານການຂົນສົ່ງໂດຍສານ ແລະ ຂົນສົ່ງສິນຄ້າ

ການຂົນສົ່ງໂດຍສານ ສາມາດສະໜອງການໃຫ້ບໍລິການແກ່ປະຊາຊົນ ທັງພາຍໃນຢ່າງພຽງພໍ ແລະ ສາມາດເຊື່ອມຕໍ່ກັບສາກົນ. ສ່ວນການຂົນສົ່ງສິນຄ້າ ກໍ່ໄດ້ມີຫຼາຍບໍລິສັດກໍ່ຕັ້ງຂຶ້ນ ມີທັງຜູ້ປະກອບການພາຍໃນປະເທດ ແລະ ຕ່າງປະເທດ ເພື່ອກຽມພ້ອມການກ້າວເຂົ້າ AEC ໃນປີ 2015 ແລະ ພ້ອມເປັນຄູ່ຮ່ວມພັດທະນາກັບປະເທດເພື່ອນມິດ-ສາກົນ.







1.4.2 Potentials in transportation of passengers and goods

Passenger transport service is adequate for domestic routes and international connections. Cargo transportation service has been an area of investment for local and foreign investors as part of AEC integration preparation by the year 2015 as well as to be integrated with international development partners.

1.4.3 ດ້ານການພັດທະນາໂຄງລ່າງພື້ນຖານໃນແຂວງ

ຍທຂ ມີໜ້າທີ່ໂດຍກົງໃນການພັດທະນາໂຄງລ່າງພື້ນຖານ, ໃນໄລຍະຜ່ານມາ ບໍລິສັດກໍ່ສ້າງ ແລະ ສ້ອມແປງຂົວທາງໄດ້ຂະຫຍາຍຕົວເພີ່ມຂຶ້ນ, ນຳໃຊ້ທຸກແຫຼ່ງທຶນທັງພາກລັດ ແລະ ເອກະຊົນພາຍໃນ ເພື່ອຮັບໃຊ້ແນວທາງນະໂຍບາຍຂອງພັກ-ລັດ ໂດຍສະເພາະວຽກງານກໍ່ສ້າງຂົວ-ທາງ ຮັບປະກັນການສັນຈອນທັງສອງລະດູ ແລະ ຈໍລະຈອນແຈກຢາຍສິນຄ້າໃຫ້ທົ່ວເຖິງ. ການພັດທະນາບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ ໄດ້ມີການອອກແບບແຜນຜັງບ້ານ ແລະ ຕົວເມືອງຕ່າງໆພາຍໃນແຂວງ, ສະໜອງນ້ຳປະປາໃນຕົວເມືອງນ້ອຍ ໃຫ້ປະຊາຊົນໄດ້ນຳໃຊ້ຢ່າງພຽງພໍເທື່ອລະກ້າວ. ຄຽງຄູ່ກັບການພັດທະນາ ຍັງໄດ້ໃຫ້ຄວາມຮູ້ຄວາມປອດໄພຕາມຖະໜົນແກ່ຜູ້ສັນຈອນ ເພື່ອຫຼີກລ້ຽງອຸປະຕິເຫດ ແລະ ເພີ່ມຄວາມສະດວກໃຫ້ປະຊາຊົນ ໃນການພັດທະນາເສດຖະກິດ ແລະ ສັງຄົມ.







1.4.3 Infrastructure development potentials in the province

The public works and transport sector has direct roles in the infrastructure development, in particular the construction and maintenance of roads and bridges by using the funds from the public and private sectors to support the policies and guidelines of the party and the government to ensure the transportation accessibility all year round, and to support the efforts in the development of large villages to become small cities with appropriate development plans for villages and districts within the province while ensuring the supply of water in small cities in sufficient quantities for local people. In parallel with other development activities, road safety education has also been organized for road users aiming for reduction of road accidents and to provide convenience for local travellers.







## 1.5 ດ້ານການທ່ອງທ່ຽວ

ແຂວງສະຫວັນນະເຂດ ເປັນຈຸດໃຈກາງຂອງເສັ້ນທາງເຊື່ອມຕໍ່ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ (East West Economic Corridor) ໂດຍມີຂົວມິດຕະພາບແຫ່ງທີ 2 “ສະຫວັນນະເຂດ-ມຸກດາຫານ” ແລະ ເສັ້ນທາງເລກ 09, ຊຶ່ງເປັນທ່າແຮງອັນສຳຄັນໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ໃນເຂດອະນຸພາກພື້ນລຸ່ມແມ່ນ້ຳຂອງ, ນອກຈາກນັ້ນ ແຂວງສະຫວັນນະເຂດຍັງອຸດົມສົມບູນໄປດ້ວຍແຫຼ່ງທ່ອງທ່ຽວ ທາງດ້ານວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ ທີ່ສາມາດດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດເຂົ້າມາທ່ຽວຊົມ ນັບມື້ນັບຫຼາຍຂຶ້ນ.



ແຂວງສະຫວັນນະເຂດ ແມ່ນຮັ່ງມີໄປດ້ວຍຊັບພະຍາກອນທຳມະຊາດ, ກະສິກຳ, ປ່າໄມ້ ແລະ ບໍ່ແຮ່ ແມ່ນເປັນອຸດສະຫະກຳເສດຖະກິດຕົ້ນຕໍ ຂອງແຂວງສະຫວັນນະເຂດ, ລາຍຮັບລວມຂອງແຂວງສະຫວັນນະເຂດ ຕໍ່ຫົວຄົນຕໍ່ປີ ແມ່ນມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ແຕ່ປີ 2009-2013 ລາຍຮັບລວມຂອງແຂວງໄດ້ປະກອບສ່ວນໃຫ້ລາຍຮັບຂອງປະເທດ, ອັດຕາການເຕີບໂຕເສດຖະກິດ ສະເລ່ຍລວມຍອດຜະລິດຕະພັນພາຍໃນ ຂະຫຍາຍຕົວເພີ່ມຂຶ້ນໄດ້ 12.76 % ຕໍ່ປີ, **GDP** ສະເລ່ຍຕໍ່ຫົວຄົນ = 1,469 US$ ຕໍ່ປີ.





ສະພາບການທ່ອງທ່ຽວ ຂອງແຂວງສະຫວັນນະເຂດ ຖືວ່າ ມີການຂະຫຍາຍຕົວສາມາດເປັນພື້ນຖານ ໃຫ້ແກ່ການກະກຽມຫັນເປັນອຸດສະຫະກຳທ່ອງທ່ຽວ. ໃນໄລຍະຜ່ານມາ ພັກ ແລະ ລັດຖະບານໄດ້ລົງທຶນໃສ່ການສ້າງພື້ນຖານໂຄງລ່າງສິ່ງອຳນວຍຄວາມສະດວກ ແລະ ຊຸກຍູ້ສົ່ງເສີມທຸລະກິດພາຍໃນ ດຶງດູດຕ່າງປະເທດເຂົ້າມາລົງທຶນ ແລະ ຂະຫຍາຍກິດຈະການທຸລະກິດບໍລິການທ່ອງທ່ຽວ, ຜະລິດຕະພັນທ່ອງທ່ຽວໃຫ້ນັບມື້ນັບຂະຫຍາຍຕົວ ເຊັ່ນ: ມີການພັດທະນາ ແລະ ປັບປຸງແຫຼ່ງທ່ອງທ່ຽວ ທັງໝົດ 116 ແຫ່ງ: ທາງດ້ານວັດທະນະທຳ 29 ແຫ່ງ , ທຳມະຊາດ 74 ແຫ່ງ ແລະ ປະຫວັດສາດ 13 ແຫ່ງ. ສິ່ງອຳນວຍຄວາມສະດວກທາງດ້ານໂຮງແຮມ ມີ 32 ແຫ່ງ, ເຮືອນພັກ 145 ແຫ່ງ, ຫ້ອງນອນ 1,662 ຫ້ອງ, ຕຽງນອນ 2,390 ຕຽງ, ຮ້ານອາຫານ 136 ແຫ່ງ ແລະ ບໍລິສັດນຳທ່ຽວ11 ແຫ່ງ.

ນອກຈາກນັ້ນ, ຍັງມີການບໍລິການເຂົ້າ-ອອກ ແລະ ສາມາດວິຊາກັບດ່ານສາກົນ ຄື: ດ່ານສາກົນ “ຂົວມິດຕະພາບ 2“ ແລະ “ແດນສະຫວັນ-ລາວບາວ” ພ້ອມທັງໃຫ້ມີຄວາມສະດວກ ແລະ ວ່ອງໄວ.

ຈຳນວນນັກທ່ອງທ່ຽວເຂົ້າມາຢ້ຽມຢາມແຂວງສະຫວັນນະເຂດເລີ້ມແຕ່ປີ 2009-2013:

- 2009 = 589,173 ຄົນ
- 2010 = 916,683 ຄົນ
- 2011 = 1,124,905 ຄົນ
- 2012 = 1,151,122 ຄົນ
- 2013 = 1,167,154 ຄົນ
- ສະເລ່ຍລາຍຮັບ = 45 ໂດລາສະຫະລັດ/ຄົນ

## 1.5 Tourism

Savannakhet is a central location of the East-West Economic Corridor with the Friendship Bridge 2 connecting Savannakhet to Mudahan and Road 9 which is an important potential for development activities and for tourism promotion in the GMS region. Apart from this, Savannakhet province is also rich in cultural, natural and historical tourist destinations which can attract local and international tourists.

Savannakhet is also rich in natural resources, agricultural potentials, forests, and mines which is the main industry of the province. The total revenue per capita per year has continually increased during the period of 2009-2013 which has contributed to of the national economic growth making the average GDP to increase at the rate of 12.76% or equivalent to USD 1,469 per person per year.



Tourism has been growing in Savannakhet province and it can be a fundamental factor for the development of tourism industry. The government has invested in building tourism infrastructures and enabling environment and has promoted local and foreign investors to invest and expand tourism services and to increase the number of tourism products, for instance, the development and improvement of 116 tourism sites. Of these 29 are cultural sites, 74 are natural sites and 13 are historical sites. There are 32 hotels, 145 guesthouses, 1,662 rooms, 2,390 beds, 136 restaurants and 11 tourist companies. Apart fron these, tourst visa can be obtained at the international border checkpoints at the Friendship Bridge 2 and at the Dansavan - Laobao checkpoint to ensure convenience and quick services.

Number of tourists visiting Savannakhet during 2009-2013:

- 2009 = 589,173 tourists
- 2010 = 916,683 tourists
- 2011 = 1,124,905 tourists
- 2012 = 1,151,122 tourists
- 2013 = 1,167,154 tourists
- Average income: USD 45 / head

## 1.6 ດ້ານພະລັງງານ ແລະ ບໍ່ແຮ່

### 1.6.1 ດ້ານບໍ່ແຮ

ອຸດສາຫະກຳດ້ານບໍ່ແຮ່ ແມ່ນໜຶ່ງໃນອຸດສາຫະກຳ ທີ່ມີຄວາມສຳຄັນໃນການສົ່ງເສີມເສດຖະກິດ ແລະ ສັງຄົມ ໂດຍແຂວງສະຫວັນນະເຂດ ເປັນແຂວງໜຶ່ງທີ່ມີທ່າແຮງທຸລະກິດດ້ານບໍ່ແຮ່ ເນື່ອງຈາກວ່າເປັນຂົງເຂດທີ່ເປັນອ່າງຕົກຕະກອນຂະໜາດໃຫຍ່ ແລະ ຜ່ານຂະບວນການວິວັດທາງທໍລະນີສາດ-ບໍ່ແຮ່ ແລະ ມີທົ່ງພຽງທີ່ກວ້າງຂວາງ ເຊິ່ງອຸດົມສົມບູນໄປດ້ວຍຊັບພະຍາກອນໃຕ້ດິນທີ່ມີຄຸນຄ່າ, ລາຄາແພງ ເປັນຕົ້ນ ແມ່ນແຫຼ່ງແຮ່ທາດທີ່ສຳຄັນ ຄື: ແຮ່ຄຳ, ແຮ່ເງິນ, ແຮ່ທອງແດງ, ແຮ່ເຫຼັກ, ຫີນກາວ, ຫີນປູນ, ຫີນຊາຍກ້ອນ, ຫີນກຣານິດ, ຫີນບາຣິດ, ເກືອກິນ, ເກືອກາລີ (ເກືອເຄມີ) ແລະ ຖ່ານຫີນ. ແຮ່ທາດດັ່ງກ່າວ ແມ່ນສະໜອງເຂົ້າໃນວຽກງານອຸດສາຫະກຳ, ວົງການແພດ, ກະສິກຳ ແລະ ອຸປະໂພກບໍລິໂພກ,ດ້ານການຕະຫຼາດຊື້-ຂາຍແຮ່ທາດ ສ່ວນໃຫຍ່ແມ່ນການຈຳໜ່າຍພາຍໃນປະເທດ ແລະ ຈຳໜ່າຍຕ່າງປະເທດ ເຊັ່ນ: ປະເທດຫວຽດນາມ, ຣາດຊະອານາຈັກໄທ, ປະເທດຍີ່ປຸ່ນ, ປະເທດສິງກະໂປ, ປະເທດຈີນ, ປະເທດກຳປູເຈຍ. ແຂວງສະຫວັນນະເຂດ ແມ່ນມີແຮ່ທາດຫຼາຍຊະນິດ ເຊິ່ງເປັນແຫຼ່ງສົ່ງເສີມໃນການລົງທຶນດ້ານແຮ່ທາດ.






## 1.6 Energy and Mining

### 1.6.1 Mining

Mining is one of the industries which is important for social and economic development promotion. Savannakhet has mining potentials because it has large sedimentation areas with historical evolutions in geology and mines, and it has large lowland areas rich in natural resources with high economic values of minerals, such as gold, silver, copper, iron, gibsum, lime stone, precious rocky sand, granite, barite, salt, cali salt (chemical salt) and muddy coal. These minerals can be used as supply materials for industrial activities, medical service, agriculture and human consumption. These minerals are extracted for domestic trade and for export, for instance, to Vietnam, Thailand, Japan, Singapore, China, and Cambodia. Savannakhet has a lot of minerals which are the potentials for investment promotion.





### 1.6.2 ດ້ານພະລັງງານໄຟຟ້າ

ດ້ວຍສະພາບພູມສັນຖານ ແລະ ມີສາຍນ້ຳທີ່ໜາແໜ້ນ ສະລັບສັບຊ້ອນ ມີແກ້ງ, ມີຕາດ ເປັນຕົ້ນເຂດ 4 ຕົວເມືອງພູດອຍ ເຊັ່ນ: ເມືອງເຊໂປນ, ເມືອງວິລະບູລີ, ເມືອງນອງ ແລະ ເມືອງພິນ ໂດຍສະເລ່ຍ ປະລິມານນ້ຳຝົນປະມານ 2,000 ມມ. ຕໍ່ປີ ເໝາະແກ່ການສ້າງເປັນແຫຼ່ງສະໜອງພະລັງງານໄຟຟ້າ ໃຫ້ແກ່ການເຕີບໂຕຂອງເສດຖະກິດ-ສັງຄົມ, ເວົ້າສະເພາະ ແມ່ນ ເຂດທີ່ມີຄວາມຕ້ອງການພະລັງງານໄຟຟ້າສູງ ເພື່ອສະໜອງໃຫ້ແກ່ບັນດາໂຮງງານທີ່ມີຫຼາຍຂຶ້ນ.





### 1.6.2 Electrical Power

In terms of geographical locations, the province has a diversity of rivers, waterfalls in particular in the 4 mountanous districts, such as Sepon, Virabouly, Nong and Phin districts which have an average rainfall amout of 2,000 mm per year. This condition is suitable for hydropower development projects which can support the social-economic growth and other development activities, in particular in areas where power demand is high for the supply to manufacturing industries.



## 1.7 ເຂດເສດຖະກິດພິເສດ ສະຫວັນ-ເຊໂນ

ເຂດເສດຖະກິດພິເສດ **ສະຫວັນ-ເຊໂນ** (ຂສສຊ) ປະກອບມີ 04 ເຂດພັດທະນາ ມີເນື້ອທີ່ທັງ 1,010 ເຮັກຕາ, ໃນນັ້ນ ລວມມີ: ເຂດ A ມີ 295 ເຮັກຕາ, ເຂດ B ມີ 373 ເຮັກຕາ, ເຂດ C ມີ 234 ເຮັກຕາ, ເຂດ D ມີ 108 ເຮັກຕາ ແລະ ອີກເຂດພວມຢູ່ໃນຂັ້ນຕອນສະເໜີຂໍເພີ່ມເຕີມກັບລັດຖະບານ ຄື: ເຂດ E ມີ 100 ເຮັກຕາ; ປັດຈຸບັນນີ້ ການລົງທຶນໃນ ຂສສຊ ລວມມີ 39 ບໍລິສັດ, ມີມູນຄ່າການລົງທຶນ 160,548,700 USD, ທຶນຈົດທະບຽນມີ 52,033,600 USD. ການລົງທຶນຂອງບັນດາບໍລິສັດຕ່າງໆໃນ ຂສສຊ ໄດ້ສົ່ງຜົນດີໂດຍກົງແກ່ປະຊາຊົນ, ເຮັດໃຫ້ເຂົາເຈົ້າມີແຫຼ່ງການສ້າງລາຍຮັບ, ມີວຽກເຮັດງານທຳ ຊຶ່ງສະແດງອອກໃນຕົວເລກລາຍຮັບເງິນເດືອນຂອງພະນັກງານ-ກຳມະກອນ ຂອງບໍລິສັດ.




## 1.7 Savan-Seno Special Economic Zone

The Savan-Seno Special Economic Zone comprises of 4 development areas with a total land area of 1,010 ha of which 295 ha is in zone A, 373 ha in zone B, 234 ha in zone C and 108 ha in zone D. There is an additional zone E of 100 ha for which a proposal is being submitted to the government to be approved. At present, there are 39 companies investing in the Savan-Seno Special Economic Zone with an investment capital of USD 52,033,600. The investment projects in the Savan-Seno Special Economic Zone bring about the direct benefits to local people in the forms of incomes, employment opportunities and salaries received by the companies' workers



ຕົວຢ່າງ ຈຳນວນ 04 ບໍລິສັດໃນເດືອນ 12/2013 ທີ່ຜ່ານມາ, ໄດ້ຈ່າຍເງິນເດືອນມີມູນຄ່າລວມ 820,566,604 ກີບ ສຳລັບຈຳນວນແຮງງານ 731 ຄົນ (ບໍ່ລວມລາຍຮັບຂອງຕ່າງປະເທດ) ສະເລ່ຍແມ່ນ 1,097,902 ກີບ/ຄົນ/ເດືອນ ຫຼື ເທົ່າກັບ 1,646.8 USD/ຄົນ/ປີ. ຖ້າສົມທຽບຕົວເລກ GDP ລາຍໄດ້ຕໍ່ຫົວຄົນຂອງແຂວງແມ່ນໄດ້ລື່ນ 37.2%. ຕາມແຜນຄາດຄະເນໃນສົກປີ 2013-2015, ບັນດາບໍລິສັດຕ່າງໆໃນ ຂສສຊ ຍັງມີຄວາມຕ້ອງການແຮງງານຕື່ມອີກ ຈຳນວນ 8,451 ຄົນ, ຊຶ່ງກວມເອົາເກືອບ 01% ຂອງພົນລະເມືອງທັງໝົດ ຂອງແຂວງສະຫວັນນະເຂດ.

ເວົ້າລວມແລ້ວການລົງທຶນໃນ ຂສສຊ ສ່ວນໃຫຍ່ແມ່ນອຸດສາຫະກຳການຜະລິດ ເພື່ອສົ່ງອອກໄປຕ່າງປະເທດ, ຊຶ່ງສາມາດເຫັນໄດ້ຕົວເລກການສົ່ງອອກ, ເລີ່ມແຕ່ສົກປີ 2012-2013 ມາຮອດປັດຈຸບັນ ມີ 02 ບໍລິສັດ ຄື: ບໍລິສັດ ແອໂລ ເວີກສລາວ ຈຳກັດ ຈາກປະເທດໂຮນແລນ ທີ່ຜະລິດອຸປະກອນເບາະນັ່ງໃນເຮືອບິນ ແລະ ບໍລິສັດ ເອຊີລໍລາວ ຈຳກັດ ຈາກປະເທດຝະຣັ່ງ ເປັນບໍລິສັດທີ່ມີຊື່ສຽງອັນດັບໂລກ ໃນການຜະລິດເລນແວ່ນຕາ ມີມູນຄ່າທັງໝົດ 1,138,099.89 USD ສົມທຽບເທົ່າກັບ 0.11% ຂອງຕົວເລກລາຍຮັບຂອງແຂວງ.




For example:

In December 2013, 4 companies paid a total salary amount of 820,566,604 Kip to 731 workers (excluding incomes of foreign workers) with an average of 1,097, 902 Kip per / person/ month or equivalent to USD1,646.8 / person/ year. If compared with the GDP the income per capita is 37.2% grater. According to the estimation plan for 2013-2015, the companies in the Savan-Seno Special Economic Zone need another 8,451 workers which is almost 1% of the total population of Savannakhet province. In general, investments projects in the Savan-Seno Special Economic Zone are related to industrial productions for export. This can been seen by the export statistics from the year 2012-2013 to date of 2 companies, namely Aero Works Laos Limited from the Netherland producing airoplane seats and a French world class company, Asilor Laos Limited, producing optical products which have a total value of USD 1,138,099.89 equivalent to 0.11% of the total revenue of the province.



ANNIVERSARY
1992 - 2014

# ພາກ 2

## ການກຳເນີດຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ

ສະພາການຄ້າໂລກ ໄດ້ຖືກສ້າງຕັ້ງຂຶ້ນຄັ້ງທຳອິດຢ່າງ ເປັນທາງການ ແລະ ຖືກຕ້ອງຕາມກົດໝາຍ ໃນປີ 1599 ທີ່ ເມືອງມາກໄຊ, ປະເທດຝຣັ່ງເສດ. ປັດຈຸບັນມີ 147 ປະເທດ ທົ່ວໂລກ ທີ່ໄດ້ສ້າງຕັ້ງສະພາການຄ້າ.

ໃນເດືອນ ພຶດສະພາ ປີ 1989, ລັດຖະບານ ແຫ່ງ ສປປ ລາວ ຈຶ່ງໄດ້ຕັດສິນໃຈສ້າງຕັ້ງ ສຄອ ແຫ່ງຊາດລາວຂຶ້ນ ຕາມ ມະຕິຕົກລົງຂອງ ສະພາລັດຖະມົນຕີ ສະບັບ ເລກທີ 0598/ ຫສນຍ, ລົງວັນທີ 05/05/1989 ແລະ ເພື່ອເສີມຂະຫຍາຍບົດ ບາດຂອງ ສຄອ ແຫ່ງຊາດ ຈຶ່ງໄດ້ມີດຳລັດສະບັບ ເລກທີ 175/ ນຍ, ລົງວັນທີ 20/08/1989.

ພາຍໃຕ້ອຸດົມການອັນດຽວກັນ, ສຄອ ແຂວງສະຫວັນ ນະເຂດ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 16 ມັງກອນ 1992 ເພື່ອເປັນຕົວແທນໃຫ້ແກ່ພາກທຸລະກິດ ຢູ່ພາກກາງຂອງ ສປປ ລາວ.

ເພື່ອເປັນບ່ອນອີງໃຫ້ແກ່ ສຄອ ແຫ່ງຊາດ ໃນການເຕົ້າ ໂຮມ ແລະ ຄຸ້ມຄອງພາກທຸລະກິດ, ລັດຖະບານຈຶ່ງໄດ້ມີດຳລັດ ສະບັບ ເລກທີ 125/ນຍ, ລົງວັນທີ 23/07/2003. ຕໍ່ມາກໍໄດ້ ອອກດຳລັດ ສະບັບ ເລກທີ 316/ນຍ ລົງວັນທີ 20/09/2009 ເພື່ອຍົກພາລະບົດບາດຂອງ ສຄອ ແຫ່ງຊາດ ໃຫ້ກວ້າງຂວາງ ແລະ ສອດຄ່ອງກັບສະພາບຕົວຈິງຂອງການພັດທະນາເສດ ຖະກິດ-ສັງຄົມ ໃນປັດຈຸບັນ.

## ເຄື່ອງໝາຍຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ
## LOGO OF SAVANNAKHET CHAMBER OF COMMERCE & INDUSTRY

ເຄື່ອງໝາຍຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ ເປັນຮູບວົງມົນ ປະກອບດ້ວຍ:

- ຮູບພະທາດ ອິງຮັງ ຢູ່ໃຈກາງ ໝາຍເຖິງ ການຈັດຕັ້ງລວມສູນຂອງ ສຄອ ແຂວງສະຫວັນນະເຂດ
- ຂອບເບື້ອງເທິງ ມີອັກສອນຫຍໍ້ " ສຄອ.ສຂ " ແລະ ຂອບເບື້ອງລຸ່ມ ມີອັກສອນ SCCI (SAVANNAKHET CHAMBER OF COMMERCE & INDUSTRY) ເຊິ່ງເປັນຊື່ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ
- ຢູ່ທັງສອງຂ້າງຂອງຮູບພະທາດອິງຮັງ ມີສັນຍາລັກ ຮວງເຂົ້າ ໝາຍເຖິງ ຄວາມອຸດົມສົມບູນຂອງທຸລະກິດ, ກະສິກຳ-ປ່າໄມ້ ແລະ ການທ່ອງທ່ຽວ
- ຢູ່ກ້ອງ ພະທາດອິງຮັງ ມີຮູບກົນຈັກ ໝາຍເຖິງ ອຸດສາຫະກຳ ແລະ ການຄ້າ
- ທັງໝົດນີ້ ຢູ່ໃນຂອບວົງກົມ ໝາຍເຖິງ ການຊີ້ນຳຂອງ ສູນກາງພັກ ແລະ ລັດຖະບານ.

## ສຳນັກງານຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ

ສຳນັກງານຂອງ ສຄອ ແຂວງສະຫວັນນະເຂດ ໄດ້ມີການປ່ຽນແປງ ແລະ ຍົກຍ້າຍຕາມສະພາບການຕົວຈິງ ດັ່ງນີ້:

- ສະຖານທີ່ຢູ່ຫ້ອງການ ສຄອ ແຂວງສະຫວັນນະເຂດ ສະໄໝທີ I (1992-1995)
  ພະແນກອຸດສາຫະກຳ ແລະ ການຄ້າແຂວງ
  ຖະໜົນສີສະຫວ່າງວົງ, ບ້ານສຸນັນທາ, ເມືອງໄກສອນພົມວິຫານ
- ສະຖານທີ່ຢູ່ຫ້ອງການ ສຄອ ແຂວງສະຫວັນນະເຂດ ສະໄໝທີ II (1995-2002)
  ບ້ານໄຊຍະມຸງຄຸນ, ເມືອງໄກສອນພົມວິຫານ
- ສະຖານທີ່ຢູ່ຫ້ອງການ ສຄອ ແຂວງສະຫວັນນະເຂດ ສະໄໝທີ III (2002-2005)
  ບ້ານໄຊຍະມຸງຄຸນ, ເມືອງໄກສອນພົມວິຫານ
- ສະຖານທີ່ຢູ່ຫ້ອງການ ສຄອ ແຂວງສະຫວັນນະເຂດ ສະໄໝທີ IV (2005-2008)
  ຕຶກຕະຫຼາດດາວເຮືອງ, ຖະໜົນລາດສະວົງເສິກ
  ບ້ານທ່າເມືອງ, ເມືອງໄກສອນພົມວິຫານ
- ສະຖານທີ່ຢູ່ຫ້ອງການ ສຄອ ແຂວງສະຫວັນນະເຂດ ສະໄໝທີ V (2008-2012)
  ເຮືອນເລກທີ 305, ຖະໜົນອຸດົມສິນ
  ບ້ານສຸນັນທາ, ເມືອງໄກສອນພົມວິຫານ
  ໄດ້ເລີ່ມນຳໃຊ້ ນັບແຕ່ວັນທີ 14 ກຸມພາ 2011.





ພິທີເປີດນຳໃຊ້ຫ້ອງການ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ,ໃນວັນທີ 14 ກຸມພາ 2011




ຫ້ອງການຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ ໃນປັດຈຸບັນ



## ພາລະບົດບາດຂອງ ສຄອ ແຂວງສະຫວັນນະເຂດ

- ນຳພາບັນດາສະມາຊິກ ເປັນແບບຢ່າງໃນການປະກອບທຸລະກິດດ້ວຍຄວາມຊື່ສັດສຸດຈະຫຼິດ ຕໍ່ປະເທດຊາດ, ສັງຄົມ ແລະ ສະມາຊິກດ້ວຍກັນ
- ປົກປ້ອງສິດຜົນປະໂຫຍດອັນຖືກຕ້ອງ ແລະ ຊອບທຳຂອງລັດ ແລະ ທຸລະກິດ, ເປັນຕົ້ນແມ່ນ ບັນດາສະມາຊິກ ທີ່ສັງກັດບັນດາກຸ່ມທຸລະກິດ ແລະ ສະມາຄົມຕ່າງໆ
- ສະເໜີຄວາມຄິດຄວາມເຫັນ ຕໍ່ບັນດາອົງການຈັດຕັ້ງຂອງລັດ ທີ່ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ ການເຄື່ອນໄຫວທາງທຸລະກິດ
- ສົ່ງເສີມການຜະລິດ ເພື່ອເປັນສິນຄ້າຂາອອກ ແລະ ຊົມໃຊ້ພາຍໃນ, ສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກ ການຜະລິດພາຍໃນ ໃຫ້ສາມາດແຂ່ງຂັນກັບຕະຫຼາດສາກົນ
- ປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ ແລະ ນະໂຍບາຍທາງດ້ານເສດຖະກິດຂອງລັດ
- ປະຕິບັດວຽກງານຕາມການມອບໝາຍຂອງລັດຖະບານ ແນໃສ່ຂະຫຍາຍການພົວພັນດ້ານເສດຖະກິດການຄ້າ ກັບຕ່າງປະເທດ ທີ່ມີຫຼືບໍ່ມີສາຍພົວພັນທາງການທູດກັບ ສປປ ລາວ
- ເຈລະຈາກ່ຽວກັບ ການຄ້າ, ການລົງທຶນ, ການບໍລິການ ກັບອົງການທີ່ກ່ຽວຂ້ອງຂອງລັດ ແລະ ຕ່າງປະເທດ ຕາມການມອບໝາຍຂອງລັດຖະບານ ແລະ ສຄອ ແຫ່ງຊາດ
- ຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດຂອງສິນຄ້າຕ່າງໆ
- ຮັບຮອງເອົາການສ້າງຕັ້ງສະມາຄົມ ຫຼື ກຸ່ມ ທີ່ຢູ່ພາຍໃນແຂວງ.

## ໂຄງປະກອບການຈັດຕັ້ງ ສຄອ ແຂວງສະຫວັນນະເຂດ

ໂຄງປະກອບການຈັດຕັ້ງຂອງ ສຄອ ແຂວງສະຫວັນນະເຂດ ປະກອບດ້ວຍ:

- ຄະນະປະທານ ແລະ ຄະນະບໍລິຫານງານ ເຊິ່ງຖືກເລືອກຕັ້ງມາຈາກກອງປະຊຸມຫຼວງ
- ພະນັກງານປະຈຳຫ້ອງການ

## ສະມາຊິກ ສຄອ ແຂວງສະຫວັນນະເຂດ

ສະມາຊິກຂອງ ສຄອ ແຂວງສະຫວັນນະເຂດ ລວມມີ 4 ປະເພດ ຄື:

1. ສະມາຊິກສາມັນ ໄດ້ແກ່ ບັນດາບຸກຄົນ ຫຼື ນິຕິບຸກຄົນ ທີ່ມີສັນຊາດລາວ ແລະ ໄດ້ຮັບອະນຸຍາດໃຫ້ປະກອບ ທຸລະກິດຢູ່ ແຂວງສະຫວັນນະເຂດ
2. ສະມາຊິກວິສາມັນ ໄດ້ແກ່ ບັນດາບຸກຄົນ ຫຼື ນິຕິບຸກຄົນ, ສະມາຊິກຜູ້ຖືສັນຊາດຕ່າງດ້າວ ທີ່ໄດ້ຮັບອະນຸຍາດ ໃຫ້ປະກອບທຸລະກິດຕ່າງໆ ຢູ່ໃນແຂວງສະຫວັນນະເຂດ ຄືກັບສະມາຊິກສາມັນ
3. ສະມາຊິກສົມທົບ ໄດ້ແກ່ ບັນດາບຸກຄົນ, ສະມາຊິກຜູ້ຖືສັນຊາດ ທີ່ມີຄຸນສົມບັດ ແລະ ຄວາມສາມາດ ໂດຍໄດ້ ຜ່ານປະສົບການ ຫຼື ມີຄວາມຊຳນານກ່ຽວກັບວິຊາການໃດໜຶ່ງມາກ່ອນ ມີຈຸດປະສົງເຂົ້າມາສະໜັບສະໜູນ ສຄອ ແຂວງ ໂດຍການເຊື້ອເຊີນຂອງຄະນະກຳມະການບໍລິຫານງານຂອງ ສຄອ ແຂວງສະຫວັນນະເຂດ
4. ສະມາຊິກກິຕິມະສັກ ໄດ້ແກ່ ບັນດາບຸກຄົນໂດຍບໍ່ຈຳແນກສັນຊາດ ທີ່ມີຄຸນສົມບັດ ແລະ ຄວາມສາມາດ, ຜ່ານ ປະສົບການ ຫຼື ມີຄວາມຊຳນານກ່ຽວກັບວິຊາການໃດໜຶ່ງມາກ່ອນ ມີຈຸດປະສົງເຂົ້າມາສະໜັບສະໜູນ ສຄອ ແຂວງ ແລະ ຖືກເປັນກຽດຮັບເຊີນຈາກ ຄະນະກຳມະການບໍລິຫານງານ ຂອງ ສຄອ ແຂວງສະຫວັນນະເຂດ.

## ຄຸນສົມບັດຂອງສະມາຊິກ ສຄອ ແຂວງສະຫວັນນະເຂດ

- ມີອາຍຸບັນລຸນິຕິພາວະ
- ມີຄວາມປະພຶດຖືກຕ້ອງຕໍ່ສັງຄົມທົ່ວໄປ
- ບໍ່ມີພະຍາດທີ່ສັງຄົມລັງກຽດ
- ມີພື້ນຖານເສດຖະກິດສັງຄົມທີ່ໝັ້ນຄົງ
- ເຫັນດີປະຕິບັດຕາມຈຸດປະສົງ, ກົດລະບຽບ ແລະ ໂຄງການດຳເນີນງານຂອງ ສຄອ ແຂວງສະຫວັນນະເຂດ ຜູ້ເຂົ້າເປັນສະມາຊິກຈະຕ້ອງຍື່ນຄຳຮ້ອງຕໍ່ເລຂາທິການຕາມແບບຟອມ, ໂດຍມີສະມາຊິກສາມັນ 02 ຄົນໃຫ້ ການຮັບຮອງ
- ບຸກຄົນທີ່ເປັນນັກທຸລະກິດ ແລະ ຕົວແທນຂອງນິຕິບຸກຄົນ ທີ່ຂຶ້ນທະບຽນຢູ່ແຂວງສະຫວັນນະເຂດ ພາຍໃຕ້ກົດ ໝາຍວິສາຫະກິດຂອງ ສປປ ລາວ, ນັບແຕ່ຂັ້ນເມືອງຂຶ້ນມາ ລ້ວນແລ້ວແຕ່ຖືກບັນຈຸເຂົ້າມາເປັນສະມາຊິກຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ.

ໃນວັນທີ 22 ທັນວາ 2012, ຫ້ອງການ ສຄອ ແຂວງສະຫວັນນະເຂດ ໄດ້ສ້າງສູນວາງສະແດງສິນຄ້າ ແລະ ຂໍ້ມູນຂ່າວສານ ຕາມແລວເສດຖະກິດ ຕາເວັນອອກ-ຕາເວັນຕົກ 04 ປະເທດ ມີ: ສະຫະພາບມຽນມາ, ຣາຊະອານາຈັກໄທ, ສປປ ລາວ ແລະ ສສ ຫວຽດນາມ. ສະຖານທີ່ຕັ້ງຢູ່ ຕຶກຕະຫຼາດດາວເຮືອງ, ຖະໜົນລາດສະວົງເສິກ, ບ້ານທ່າເມືອງ, ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ.



















2ND ANNIVERSARY 1992 - 2014

## ພາກ 3

### ການເຕີບໃຫຍ່ຂະຫຍາຍຕົວຂອງ ສຄອ ແຂວງສະຫວັນນະເຂດ

ສຄອ ແຂວງສະຫວັນນະເຂດ ແມ່ນອົງການຈັດຕັ້ງທາງສັງຄົມຂອງນັກທຸລະກິດ,ເປັນຂົວຕໍ່ລະຫວ່າງອົງການຂອງລັດ ແລະ ຫົວໜ່ວຍທຸລະກິດ, ເປັນຕົວແທນໃຫ້ຜູ້ໃຊ້ແຮງງານ, ສະມາຄົມ ແລະ ຫົວໜ່ວຍທຸລະກິດຕ່າງໆ ຢູ່ແຂວງສະຫວັນນະເຂດ

ພາຍໃຕ້ການຊີ້ນຳ-ນຳພາຂອງ ອົງຄະນະພັກ-ອຳນາດການປົກຄອງແຂວງສະຫວັນນະເຂດ ກໍຄື ສຄອ ແຫ່ງຊາດ, ສຄອ ແຂວງສະຫວັນນະເຂດ ໄດ້ເຮັດໜ້າທີ່ປຸກລະດົມ ຂົນຂວາຍ, ສຶກສາອົບຮົມ, ນຳພາ-ຈັດຕັ້ງ, ເຕົ້າໂຮມຄວາມສາມັກຄີ, ຊ່ວຍເຫຼືອເຊິ່ງກັນ ແລະກັນ, ຊຸກຍູ້ສົ່ງເສີມການດຳເນີນທຸລະກິດ ໃຫ້ມີປະສິດທິຜົນສູງ ແລະ ຖືກຕ້ອງຕາມກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດທີ່ຊອບທຳຂອງສະມາຊິກ ໃນການພັດທະນາເສດຖະກິດ ແລະ ສັງຄົມ.

ການເຕີບໃຫຍ່ຂະຫຍາຍຕົວຂອງ ສຄອ ແຂວງສະຫວັນນະເຂດ ຕະຫຼອດໄລຍະເວລາ 22 ປີ ຜ່ານມາ, ຢັ້ງຢືນໄດ້ໂດຍຜ່ານຜົນງານ,ການເຄື່ອນໄຫວ ແລະນຳພາຂອງ ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ 05 ສະໄໝ ໃນແຕ່ລະໄລຍະ ດັ່ງນີ້:

# ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ I (1992-1995)
## THE FIRST SCCI BOARD MEMBERS (1992-1995)

- ອີງຕາມມະຕິຕົກລົງຂອງ ສະພາລັດຖະມົນຕີ ສະບັບເລກທີ 0598/ຫສລ ລົງວັນທີ 05/05/1989 ວ່າດ້ວຍການສ້າງຕັ້ງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ;
- ອີງຕາມມະຕິຕົກລົງຂອງ ລັດຖະມົນຕີ ກະຊວງການຄ້າ ແລະ ພົວພັນເສດຖະກິດກັບຕ່າງປະເທດ ສະບັບເລກທີ 2696/ ກຄພ ລົງວັນທີ 26 ທັນວາ 1989 ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການບໍລິຫານງານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ;
- ອີງຕາມໃບຂໍອະນຸມັດ ເລກທີ 217/ກຄພ/ຂ ລົງວັນທີ 07 ຕຸລາ 1991 ຂອງ ຫົວໜ້າພະແນກ ອຸດສາຫະກຳ, ການຄ້າ ແລະ ທ່ອງທ່ຽວ ແຂວງສະຫວັນນະເຂດ ແລະ ໂດຍໄດ້ຮັບຄວາມເຫັນດີ ຂອງອຳນາດການປົກຄອງແຂວງ ດັ່ງກ່າວ ກ່ຽວກັບການແຕ່ງຕັ້ງ ຄະນະບໍລິການບໍລິຫານງານ ສະພາການຄ້າ ແລະ ອຸດສາຫະກຳແຂວງ;
- ອີງຕາມການສະເໜີຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ສະບັບເລກທີ 370/ສຄອ ລົງວັນທີ 23 ພະຈິກ 1991;
- ອີງຕາມມະຕິແຕ່ງຕັ້ງຂອງ ລັດຖະມົນຕີ ກະຊວງການຄ້າ ແລະ ທ່ອງທ່ຽວ ສະບັບເລກທີ 926/ກຄທ ລົງວັນທີ 28 ພະຈິກ 1991 ວ່າດ້ວຍການສ້າງຕັ້ງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ;

ລັດຖະມົນຕີ ກະຊວງການຄ້າ ແລະ ທ່ອງທ່ຽວ ຕົກລົງ:

ມາດຕາ 01 : ແຕ່ງຕັ້ງ ຄະນະກຳມະການບໍລິຫານງານ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ ປະກອບມີ 11 ທ່ານ ຄື :



ທ່ານ ພັນທຸລາດ ອະມະຣະທິທາດາ
ປະທານ
PHANTHOULATH AMARATHITHADA
PRESIDENT



ທ່ານ ສຽວສະຫວາດ ຈຸນລະມຸນຕຣີ
SIEVSAVATH CHOUNLAMOUNTY
ຮອງປະທານ ຜູ້ທີ 1/ FIRST VICE PRESIDENT



ທ່ານ ວິຈິດ ສີທາກຸນ
VICHIT SYTHAKOUN
ຮອງປະທານ ຜູ້ທີ 2/ SECOND VICE PRESIDENT





ທ່ານ ວົງສະຫວັນ ຊຸມພົນພັກດີ
VONGSAVANH CHOUMPHONPAKDY
ເລຂາທິການ / SECRETARY



ທ່ານ ມ່ວນ ສີເມືອງໂຄດ
MOUANE SIMUANGKHOT
ກຳມະການ / BOARD



ທ່ານ ບົວພັນ ຍົດໝັ້ນຄົງ
BOUAPHAN YODMANHKHONG
ກຳມະການ / BOARD



ທ່ານ ສົມພອນ ບຸນພາຄົມ
SOMPHONE BOUNPHAKHOM
ກຳມະການ / BOARD



ທ່ານ ພູມີ ພູມມະນີວົງ
KIA OUSITTHIDETH
ກຳມະການ / BOARD



ທ່ານ ສົມສຸກ ແສງຄຳຍອງ
SOMPHONE BOUNPHAKHOM
ກຳມະການ / BOARD



ທ່ານ ບຸນທະພອນ ອິນທິລາດ
LEUANGXAY BOUNXOKVANH
ກຳມະການ / BOARD



ທ່ານ ພົງສະຫວັນ ໄຊຍະລາດ
PHONGSAVANH XAYALATH
ກຳມະການ / BOARD

ມາດຕາ 02: ແຕ່ງຕັ້ງ ຄະນະທີ່ປຶກສາ ປະກອບມີ 10 ທ່ານ ຄື:

1. ທ່ານ ສີທັດ ໄຊສຸລິວົງ
2. ທ່ານ ຄຳຫຼ້າ ໃຈຄຳແພງ
3. ທ່ານ ສົມຊາຍ ພຸດທະຜາ
4. ທ່ານ ເກຍ ອູ່ສິດທິເດດ
5. ທ່ານ ສີປະເສີດ ສຸລິຍາພັນ
6. ທ່ານ ບິນທະວີ ທົງແສງເຍືອງ
7. ທ່ານ ໜູຝ້າຍ ທັມມະຈັນ
8. ທ່ານ ສື້ວ ສິດທິເດດ
9. ທ່ານ ຄອນສະຫວັນ
10. ທ່ານ ອໍ ສຸພົນພັກດີ

ມາດຕາ 03: ຄະນະດັ່ງກ່າວ ມີສິດ ແລະ ໜ້າທີ່ຕ່າງໆ ຊຶ່ງລະບຸໄວ້ໃນກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ໂດຍອີງໃສ່ສະພາບການ ແລະ ເງື່ອນໄຂຕົວຈິງຢູ່ແຂວງ ດັ່ງກ່າວ.

ມາດຕາ 04: ໃຫ້ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງອື່ນໆ ໃນແຂວງນັ້ນ ຕ້ອງປະຕິບັດ.

ມາດຕາ 05: ມະຕິຕົກລົງ ສະບັບນີ້ ມີຜົນສັກສິດ ນັບແຕ່ລົງລາຍເຊັນ ເປັນຕົ້ນໄປ.

ວຽງຈັນ, ວັນທີ 28 ພະຈິກ 1991
ຮ. ລັດຖະມົນຕີ ກະຊວງການຄ້າ ແລະ ທ່ອງທ່ຽວ





## ຜົນງານການເຄື່ອນໄຫວ ຂອງຄະນະບໍລິຫານງານ ຊຸດທີ I
## The Activities of The First SCCI Board Members

ຜົນງານທີ່ພົ້ນເດັ່ນຂອງຄະນະບໍລິຫານງານ ຊຸດທີ I ນັ້ນ ຄື ການເຕົ້າໂຮມຫົວໜ່ວຍທຸລະກິດ ໃນໄລຍະນັ້ນ ເຂົ້າເປັນກຸ່ມກ້ອນ ແລະ ເຂົ້າມາເປັນສະມາຊິກຂອງ ສຄອ ແຂວງສະຫວັນນະເຂດ. ການລິເລີ່ມຈາກຈຸດບໍ່ທັນມີປະສົບການຈົນສາມາດຈັດຕັ້ງ ແລະ ນຳພາເຄື່ອນໄຫວ, ພົບປະແລກປ່ຽນບົດຮຽນ ກັບ ສຄອ ແຫ່ງຊາດ ແລະ ຕ່າງປະເທດ.

**ກອງປະຊຸມໃນວັນສ້າງຕັ້ງສະພາ ການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ ໃນວັນທີ 16 ມັງກອນ1992 ທີ່ຫ້ອງປະຊຸມຂອງສະໂມສອນເມືອງຄັນທະບູລີ**










## ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ II (1995-2002)
## THE SECOND SCCI BOARD MEMBERS (1995-2002)

ການເລືອກຕັ້ງຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ II ໄດ້ຈັດໃຫ້ມີການເລືອກຕັ້ງຈາກບັນດາຫົວໜ່ວຍທຸລະກິດ ແລະ ສະມາຊິກຂອງ ສຄອ.ສຂ

ຄະນະບໍລິຫານງານ ສຄອ.ສຂ ຊຸດນີ້ ປະກອບດ້ວຍ:



ທ່ານ ຄຳປຸ່ນ ແກ້ວທິບພະວົງສາ
ປະທານ
KHAMPHOUN KEOTHIPPHAVONGSA
PRESIDENT



ທ່ານ ເກຍ ອູ່ສິດທິເດດ
ຮອງປະທານ ຜູ້ທີ 1
KIA OUSITTHIDETH
FIRST VICE PRESIDENT



ທ່ານ ສົມພອນ ບຸນພາຄົມ
ຮອງປະທານ ຜູ້ທີ 2
SOMPHONE BOUNPHAKHOM
SECOND VICE PRESIDENT



ທ່ານ ເລືອງໄຊ ບຸນໂຊກວັນ
LEUANGXAY BOUNXOKVANH
ກຳມະການ / BOARD



ທ່ານ ຄຳຫຼ້າ ໃຈຄຳແພງ
KHAMLA CHAYKHAMPHEANG
ກຳມະການ / BOARD



ທ່ານ ພົງສະຫວັນ ໄຊຍະລາດ
PHONGSAVANH XAYALATH
ກຳມະການ / BOARD



ທ່ານ ສອນສັກ ນໍຍານຊະນະ
SONESACK NORYANXAV
ກຳມະການ / BOARD





### ຄະນະທີ່ປຶກສາ / ADVISORS



ທ່ານ ພັນທຸລາດ ອະມະຣະທິທາດາ
PHANTHOULATH AMARATHITHADA



ທ່ານ ສີປະເສີດ ສຸລິຍາພັນ
SIPASEUD SOULIYAPHAN



ທ່ານ ຄຳໄສ ເທບພົມມີ
KHAMSAI THEPPHOMMY
ເລຂານຸການ / SECRETARY

## ຜົນງານການເຄື່ອນໄຫວ ຂອງຄະນະບໍລິຫານງານ ຊຸດທີ II
## THE ACTIVITIES OF THE SECOND SCCI BOARD MEMBERS

ຜົນງານການເຄື່ອນໄຫວຂອງຄະນະບໍລິຫານງານ ຊຸດທີ່ II, ແມ່ນໄດ້ມີການເຄື່ອນໄຫວໂຄສະນາ, ຂົນຂວາຍຂະຫຍາຍຕາໜ່າງສະມາຊິກ ແລະ ໄດ້ເຕົ້າໂຮມຫົວໜ່ວຍທຸລະກິດໃຫ້ເປັນ ກຸ່ມ/ສະມາຄົມ ມີຄື: ກຸ່ມການຄ້າຂາອອກ-ຂາເຂົ້າ, ກຸ່ມໂຮງງານອຸດສາຫະກຳ, ສະມາຄົມປູກຝັງ - ລ້ຽງສັດ ແລະ ສະມາຄົມຫັດຖະກຳ.

ນອກນັ້ນ, ຍັງໄດ້ເຂົ້າເຄື່ອນໄຫວນຳຄະນະກຳມະການໄກ່ເກ່ຍທຸລະກິດຂັ້ນແຂວງ ແລະ ນຳພາຫົວໜ່ວຍທຸລະກິດ ເຄື່ອນໄຫວຕາມທິດທາງແນວທາງ ພັກ-ລັດ ວາງອອກ.



ຄະນະ ສຄອ.ສຂ ເຂົ້າຮ່ວມກອງປະຊຸມສັງລວມເຂດອຸດສາຫະກຳ ຈີນ, ລາວ ແລະ ໄທ ທີ່ ຢູນານ, ສປ ຈີນ



ຄະນະ ສຄອ.ສຂ ເຂົ້າຮ່ວມກອງປະຊຸມສັງລວມເຂດອຸດສາຫະກຳ ຈີນ, ລາວ ແລະ ໄທ ທີ່ ຢູນານ, ສປ ຈີນ



ຄະນະ ສຄອ.ສຂ ເຂົ້າຮ່ວມກອງປະຊຸມສຳມະນາ ກ່ຽວກັບທະບຽນສານ



ຄະນະ ສຄອ.ສຂ ເຂົ້າຮ່ວມກອງປະຊຸມສຳມະນາ ກ່ຽວກັບ ກົດໝາຍໄກ່ເກ່ຍ ເຊັ່ນ: ກົດໝາຍອາຍາ ແລະ ກົດໝາຍແພ່ງ

## ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ III (2002-2005)
## THE THIRD SCCI BOARD MEMBERS (2002-2005)

ການເລືອກຕັ້ງຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ III, ໄດ້ມີການພັດທະນາຂຶ້ນອີກລະດັບໜຶ່ງ ໂດຍສະເພາະແມ່ນການປັບປຸງຮູບແບບຂອງການເລືອກຕັ້ງ

ຄະນະບໍລິຫານງານ ສຄອ.ສຂ ຊຸດນີ້ ປະກອບດ້ວຍ:



ທ່ານ ສຸບັນ ຈັນທະມະນີວົງ
ປະທານ
SOUBAN CHANTHAMANYVONG
PRESIDENT



ທ່ານ ເກຍ ອູ່ສິດທິເດດ
ຮອງປະທານ ຜູ້ທີ 1
KIA OUSITTHIDETH
FIRST VICE PRESIDENT



ທ່ານ ສົມພອນ ບຸນພາຄົມ
ຮອງປະທານ ຜູ້ທີ 2
SOMPHONE BOUNPHAKHOM
SECOND VICE PRESIDENT



ທ່ານ ເລືອງໄຊ ບຸນໂຊກວັນ
LEUANGXAY BOUNXOKVANH
ຄະນະກຳມະການ / COMMITTEE



ທ່ານ ຄຳຫຼ້າ ໃຈຄຳແພງ
KHAMLA CHAIKHAMPHEANG
ຄະນະກຳມະການ / COMMITTEE





ທ່ານ ບຸນລັບ ຫລວງຄຳແດງ
BOUNLAP LUANGKHAMDENG
ເລຂານຸການ / SECRETARY

## ຜົນງານ ແລະ ການເຄື່ອນໄຫວ ຂອງຄະນະບໍລິຫານງານ ຊຸດທີ III
## THE ACTIVITIES OF THE THIRD SCCI BOARD MEMBERS

ຄະນະບໍລິຫານງານ ສະພາການຄ້າ ແລະ ອຸດສາຫະກຳ ແຂວງສະຫວັນນະເຂດ ຊຸດທີ III ໄດ້ມີການເຄື່ອນໄຫວເປັນຮູບພະທຳຫຼາຍຂຶ້ນ, ມີກອງເລຂາ ແລະ ມີຫ້ອງການ ເປັນບ່ອນປຶກສາຫາລືວຽກງານ. ຄະນະບໍລິຫານງານ ສຄອ.ສຂ ຊຸດທີ III ໄດ້ອອກແຮງໂຄສະນາ, ຂົນຂວາຍ, ເຕົ້າໂຮມເອົາບັນດານັກທຸລະກິດໃຫ້ເຂົ້າເປັນສະມາຊິກຂອງ ສຄອ.ສຂ ເພີ່ມຂຶ້ນຫຼາຍກວ່າ 40 ຫົວໜ່ວຍທຸລະກິດ.

ນອກຈາກເຄື່ອນໄຫວວິຊາສະເພາະຕົນແລ້ວ ຄະນະບໍລິຫານງານ ສຄອ.ສຂ ຊຸດທີ III ຍັງໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ຢ່າງເປັນຂະບວນຟົດຟື້ນ ບໍ່ວ່າຈະເປັນວຽກງານກອງປະຊຸມປຶກສາຫາລື, ກອງປະຊຸມປະກອບຄຳຄິດຄຳເຫັນ ໃສ່ແຜນພັດທະນາເສດຖະກິດ-ສັງຄົມ ຂອງອົງຄະນະພັກແຂວງ ປະກອບຄຳເຫັນໃສ່ຮ່າງກົດໝາຍຕ່າງໆ, ສົມທົບກັບພາກລັດຈັດກອງປະຊຸມເຜີຍແຜ່ຜົນສຳເລັດຂອງກອງປະຊຸມພັກ-ລັດ ຂັ້ນຕ່າງໆ.

# ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ IV (2005-2010)
## The Forth SCCI Board Members (2005-2010)

- ອີງຕາມຂໍ້ຕົກລົງທ່ານເຈົ້າແຂວງສະຫວັນນະເຂດ ສະບັບເລກທີ 749/ຈຂ.ສຂ ລົງວັນທີ 02 ກັນຍາ 2005 ວ່າດ້ວຍການແຕ່ງຕັ້ງ ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ IV

ຄະນະບໍລິຫານງານ ສຄອ ແຂວງສະຫວັນນະເຂດ ຊຸດທີ IV ໄດ້ຜ່ານການເລືອກຕັ້ງ ຕາມລະບົບປະຊາທິປະໄຕ ຄະນະບໍລິຫານຊຸດນີ້ ປະກອບດ້ວຍ:



President

ທ່ານ ຄຽງ ອູ່ສິດທິເດດ
ປະທານ
KHIENG OUSITTHIDETH
President



ທ່ານ ພິສິດ ບັນຍາດິດ
ຮອງປະທານ ຜູ້ທີ 1
PHISITH BANYADITH
First Vice President



ທ່ານ ສອນທະວົງ ເຄນນະວົງ
ຮອງປະທານ ຜູ້ທີ 2
SONETHAVONG KHENNAVONG
Second Vice President







ທ່ານ ດຳກາ ປາມະນີວົງ
DAMKA PAMANYVONG
ຫົວໜ້າກວດກາ
Head of
Inspection Committee



ທ່ານ ສົມພອນ ບຸນພາຄົມ
SOMPHONE BOUNPHAKHOM
ຮອງຫົວໜ້າກວດກາ
Vice Head of
Inspection Committee



ທ່ານ ກີລີໄຊ ຈັນໂທ
KILEUXAY CHANTHO
ຫົວໜ້າກຳມະການເສດຖະກິດ
Head of
Economic Committee



ທ່ານ ຄຳຕາ ແສນບຸດຕະລາດ
KHAMTA SEANBOUDTALATH
ຮອງຫົວໜ້າກຳມະການເສດຖະກິດ
Vice Head of
Economic Committee



ທ່ານ ໄຊຍະແສງ ແສງສຸດາ
XAYASENG SENGSOUDA
ກຳມະການກວດກາ
Member Inspection



ທ່ານ ຈັນທະວົງ ດວງສະຫວັດ
CHANTHAVONG DOUANGSAVATH
ກຳມະການ
Board



ທ່ານ ບຸນທະໜອມ ອິນທິລາດ
BOUNTHANOM INTHILATH
ກຳມະການ
Board



ທ່ານ ນາງ ສົງບັນດິດ ຍົດໝັ້ນຄົງ
SONGBANDITH NHOTMANHKHONG
ກຳມະການ
Board

## ພະນັກງານປະຈຳຫ້ອງການ ສຄອ ແຂວງສະຫວັນນະເຂດ
## PERMANENT OFFICE OF SCCI



ທ່ານ ຄຳມາຍ ແກ້ວວິໄລຫົງ
KHAMMAI KEOVILAYHONG
ເລຂາທິການ / SECRETARY



ທ່ານ ນາງ ຈັນດາລາ ທິຄຳມີ
CHANDALA THIKHAMMY
ວິຊາການ / STAFF



ທ່ານ ປານີພອນ ໄຊຍະພອນ
PANIPHONE XAYAPHONE
ວິຊາການ / STAFF

## ຜົນງານ ແລະ ການເຄື່ອນໄຫວ ຂອງຄະນະບໍລິຫານງານ ຊຸດທີ IV
## THE ACTIVITIES OF THE FORTH SCCI BOARD MEMBERS

